ໜັງສືມິສຊິໂອດີ້ (Missio Dei) ເປັນໜັງສືຂອງອົງການ (Mennonite Mission Network) ໄດ້ຈັດພິມຂຶ້ນເພື່ອເຊີນຊວນໃຫ້ສະແດງຄວາມຄິດເຫັນ ແລະເປັນຫົນທາງທີ່ນຳໄປສູ່ການສົນທະນາກ່ຽວກັບພາລະກິດຂອງພຣະເຈົ້າຢູ່ໃນໂລກນີ້. ມີບາງເຫລັ້ມໄດ້ເນັ້ນເຖິງພຣະຄຳຂອງພຣະເຈົ້າ ແລະສາດສະໜາສາດຊຶ່ງເປັນພື້ນຖານຂອງວຽກງານພາລະກິດ. ບາງເຫລັ້ມໄດ້ກ່າວເຖິງການຮັບໃຊ້ແລະຊີວິດສ່ວນຕົວຂອງບຸກຄົນທີ່ສັດຊື່ຕໍ່ການຊົງເອີ້ນຂອງພຣະເຈົ້າ. ມຸມມອງທີ່ຂຽນໜັງສື ມິສຊິໂອດີ້ ນີ້ໄດ້ສະແດງເຖິງພາລະໃຈ ແລະການທຸ່ມເທຂອງອົງການໃນການປະກາດທາງຄຳເວົ້າແລະການກະທຳ ເພື່ອສະແດງໃຫ້ເຫັນເຖິງຂ່າວປະເສີດຂອງພຣເຢຊູຄຣິດທັງໝົດ.

## "ໃນທຸກຖະໜົນ ຈົນເຖິງສຸດປາຍແຜ່ນດິນໂລກ"

Executive Director/CEO: Stanley W. Green
Editor: James R. Krabill
Editorial Content: Karen Hallis Ritchie
Design: Rebeka Moeljono
Consulting Editor: Paula Killough
Production: Brenda Hess

Copyright © 2008 by Mennonite Mission Network, P O Box 370, Elkhart, IN 46515-0370.
What is an Anabaptist Christian?,
Palmer Becker. Revised edition 2010

ເມັນໂນໄນ ມິສເຊິນ ແນດເວີກ (Mennonite Mission Network) ເປັນອົງການຕົວແທນຂອງສະພາຄຣິສຕະຈັກ ເມັນໂນໄນໃນສະຫະລັດອາເມຣິກາ ອົງການນີ້ຢູ່ເພື່ອຈະນຳພາກະຕຸ້ນແລະສົ່ງເສີມຄຣິສຕະຈັກໃຫ້ເຂົ້າຮ່ວມເປັນພະຍານເຖິງຂ່າວປະເສີດທັງໝົດຂອງພຣະເຢຊູຄຣິດໃນໂລກແຫ່ງຄວາມລຳບາກນີ້. ສຳນັກງານຂອງອົງການຕັ້ງຢູ່:
Elkhart, Ind.; Newton, Kansas, and Harrisonburg, Va. ອົງການມິສເຊິນ ແນດເວີກ (Mission Network) ໄດ້ສະໜັບສະໜູນພາລະກິດຢູ່ໃນ ໕໕ ປະເທດ ແລະ ໓໑ ລັດໃນສະຫະລັດອາເມຣິກາ.
ISBN 978-974-9579-87-9

**ໜັງສືທຸກເຫລັ້ມຂອງມິສຊິໂອດີ້ນີ້ບໍ່ອະນຸຍາດໃຫ້ພິມເພີ້ມຫລືອັດເອກະສານນອກຈາກຈະໄດ້ຮັບອະນຸຍາດຈາກອົງການເມັນໂນໄນມິສເຊິນແນດເວີກ.**

# ແອນນາບັບຕິສຄຣິດສະຕຽນຄືຜູ້ໃດ?

## Palmer Becker

# ບົດນຳ

ຄຣິດສະຕຽນທີ່ມີມຸມມອງຂອງຄວາມເຊື່ອແລະຫົນທາງແຫ່ງຊີວິດແບບແອນນາບັບຕິສ ໄດ້ເກີດມີຂຶ້ນຕັ້ງແຕ່ເລີ້ມຕົ້ນຍຸກສະໄໝຂອງຄຣິດສະຕຽນເຖິງແມ່ນປະຈຸບັນນີ້ຄຣິສຕະຈັກທຸກກຸ່ມ ແລະເກືອບທຸກທີ່ ທີ່ນະມັດສະການຈະມີບຸກຄົນທີ່ມີຄວາມເຂົ້າໃຈກ່ຽວກັບຄວາມເຊື່ອຄຣິດສະຕຽນທີ່ຄ້າຍຄືກັນກັບແອນນາບັບຕິສທີ່ຍຶດຖືໄວ້. ແອນນາບັບຕິສຄືຫົນທາງໜຶ່ງຂອງການເປັນຄຣິດສະຕຽນເໝືອນກັບທີ່ມີຄຣິດສະຕຽນຄະນະແອງລີແກນ, ຄະນະບັບຕິສ ແລະຄະນະລູເທີແລນ ຄະນະແອນນາບັບຕິສກໍເປັນອີກຄະນະໜຶ່ງເຊັ່ນກັນ.

"ແອນນາບັບຕິສ" ເປັນຄໍາທີ່ຂຽນຂຶ້ນມາທີ່ມີຄວາມໝາຍວ່າ "ພວກທີ່ຮັບບັບຕິສະມາຄືນໃໝ່" ຊື່ນີ້ເກີດຂຶ້ນລະຫວ່າງສັດຕະວັດທີ ໑໖. ສໍາຫລັບຄຣິດສະຕຽນທີ່ບໍ່ເຫັນຄຸນຄ່າຂອງການໃຫ້ບັບຕິສະມາເດັກຈຶ່ງໄດ້ຮັບບັບຕິສະມາຕື່ມອີກຄັ້ງໜຶ່ງເມື່ອເປັນຜູ້ໃຫຍ່ພໍ ຫລັງຈາກການປະກາດຄວາມເຊື່ອຄຣິດສະຕຽນ. ແອນນາບັບຕິສເຫລົ່ານີ້ເປັນບັນພະບູລຸດຂອງຄຣິດສະຕຽນເມັນໂນໄນໃນປະຈຸບັນ ແລະຄຣິດສຕຽນກຸ່ມອື່ນໆ ຕາມຮູບແບບທໍານຽມຂອງຄຣິສຕະຈັກເສລີ ( Free Church ).

ຄຣິດສະຕຽນແອນນາບັບຕິສເມັນໂນໄນ ມີຄວາມເຊື່ອຫລາຍຢ່າງເໝືອນກັບຄວາມເຊື່ອກຸ່ມອື່ນໆ ພວກເຂົາເຊື່ອພຣະເຈົ້າຂອງການເປັນຕຣີເອກກະນຸພາບເປັນຜູ້ບໍລິສຸດ ແລະຊົງມີພຣະຄຸນຕໍ່ເຮົາ. ພວກເຂົາເຊື່ອໃນຄວາມລອດໂດຍພຣະຄຸນຂອງພຣະເຈົ້າຜ່ານທາງຄວາມເຊື່ອ ແລະການກັບໃຈໃໝ່ພວກເຂົາໃນຄວາມເປັນມະນຸດ ແລະຄວາມເປັນພຣະເຈົ້າຂອງພຣະເຢຊູຄຣິດ, ເຊື່ອໃນການດົນໃຈ ແລະສິດທິອໍານາດຂອງພຣະຄໍາ ເຊື່ອໃນລິດເດດອໍານາດຂອງພຣະວິນຍານບໍລິສຸດ ແລະເຊື່ອວ່າຄຣິສຕະຈັກເປັນພຣະກາຍຂອງພຣະອົງ ແຕ່ວ່າຄຣິດສະຕຽນແອນນາບັບຕິສຮັກສາຄວາມເຊື່ອນີ້ໃນແນວທາງທີ່ແຕກຕ່າງຈາກກຸ່ມອື່ນໆ.

ໃນບາງຄັ້ງແອນນາບັບຕິສຖືກເອີ້ນວ່າ ***ປີກຊ້າຍ*** ຂອງການປະຕິຮູບສາດສະໜາຄັ້ງຍິ່ງໃຫຍ່ (Great Reformation) ພວກເຂົາລຸກຮື້ຂຶ້ນໃນຊ່ວງເວລາຄວາມວຸ້ນວາຍຂອງສັງຄົມ ແລະເສດຖະກິດໃນສະໄໝນັ້ນ ແລະຕັ້ງໃຈທີ່ຈະສືບຕໍ່ການປະຕິຮູບຂອງ ມາຕິນ ລູເທີ (Martin Luther), ອູລຣິຈ ສະວິງລີ (Ulrich Zwingli) ແລະຈອນ ເຄວິນ (Jonh Calvin) ຊຶ່ງເປັນຜູ້ເລີ້ມຕົ້ນການປະຕິຮູບຄຣິດສະຕຽນທີ່ມີມູມມອງແບບ ແອນນາບັບຕິສຕະຫລອດປະຫວັດສາດ ໄດ້ເນັ້ນເຖິງການຕິດຕາມພຣະເຢຊູຄຣິດປະຈໍາວັນ. ການມີພັນທະສັນຍາຕໍ່ກັນແລະກັນ ໃນຊຸມຊົນຄຣິດສະຕຽນທີ່ມີພຣະເຢຊູຄຣິດເປັນສູນກາງແຫ່ງຄວາມເຊື່ອຂອງເຮົາ ແລະສະແຫວງຫາຫົນທາງເອົາຊະນະຄວາມຂັດແຍ່ງດ້ວຍວິທີ ທີ່ບໍ່ໃຊ້ຄວາມຮຸນແຮງ ທ່ານເປັນຄຣິດສະຕຽນທີ່ມີມຸມມອງແບບ ແອນນາບັບຕິສນີ້ຫລືບໍ່?

ນັກປະຕິຮູບໄດ້ຊ່ວຍໃຫ້ເຮົາເຂົ້າໃຈຢ່າງຊັດເຈນວ່າຄວາມລອດມາຈາກຄວາມເຊື່ອໂດຍພຣະຄຸນເທົ່ານັ້ນ. ແຕ່ຫລາຍຢ່າງພວກເຂົາຈໍາກັດຕົວເອງໃນໂຄງສ້າງ ແລະແນວຄວາມຄິດທີ່ເລີ້ມຕົ້ນໂດຍ ຄອນສະແຕນຕິນ ແລະອໍກັດສະຕິນ ໃນສັດຕະວັດທີ ໔ ແລະ ໕ ໃນບາງຄັ້ງຄຣິດສະຕຽນເມັນໂນໄນກໍຈໍາກັດຕົວເອງດ້ວຍເຊັ່ນກັນ, ໂດຍພະຍາຍາມສືບທອດສິ່ງທີ່ເລີ້ມຕົ້ນໂດຍ ເມັນໂນໄຊມອນ ແລະແອນນາບັບຕິສໃນສັດຕະວັດທີ ໑໖. ເຮົາທຸກຄົນສາມາດຮຽນຮູ້ຈາກກະແສການຟື້ນຟູຕ່າງໆ ວ່າການເປັນຄຣິດສະຕຽນໃນສະໄໝນັ້ນ ແລະວັດທະນະທັມເປັນຢ່າງໃດ, ໃນທີ່ສຸດເຮົາທຸກຄົນຕ້ອງກັບໄປເຂົ້າສູ່ພຣະເຢຊູຊຶ່ງເປັນຜູ້ສ້າງ ແລະກໍ່ຕັ້ງຄວາມເຊື່ອຂອງເຮົາເພື່ອຫາຮາກຖານຂອງການເປັນຄຣິດສະຕຽນໃນຍຸກສະໄໝຂອງເຮົາ.

ບັນຫາຂອງສາດສະໜາຄຣິສບໍ່ໄດ້ມາຈາກຈໍານວນຄະນະນິກາຍທີ່ມີມາກມາຍ ແຕ່ແມ່ນຍ້ອນການຫລັ່ງເລທີ່ຈະຮຽນຮູ້ຈາກກັນແລະກັນ. ຄຣິດສະຕຽນແອນນາບັບຕິສຍັງຕ້ອງມີສິ່ງທີ່ຮຽນຮູ້ຢ່າງມາກມາຍຈາກຄຣິດສະຕຽນທີ່ມີວັດທະນະທັມ ແລະທໍານຽມອື່ນໆ ເຊັ່ນອະທິປະໄຕ ແລະພຣະຄຸນຂອງພຣະເຈົ້າຄວາມສໍາຄັນຂອງຫລັກຂໍ້ເຊື່ອ ແລະຮູບແບບການມີສ່ວນຮ່ວມໃນສັງຄົມໃຫຍ່ ຄຣິດສະຕຽນທີ່ມີ

ເບື້ອງຫລັງອື່ນໆ ກໍສາມາດຮຽນຮູ້ຈາກທໍານຽມຂອງແອນນາແບບຕິສໃນແງ່ມຸມຕ່າງໆ ເຊັ່ນການຕິດຕາມພຣະເຢຊູຄຣິດໃນຊີວິດປະຈໍາວັນ, ການຕີຄວາມໝາຍພຣະຄໍາຈາກມຸມມອງທີ່ມີພຣະຄຣິດເປັນສູນກາງແຫ່ງຄວາມເຊື່ອຂອງເຮົາ ແລະການໃຫ້ຄວາມສໍາຄັນວ່າພຣະເຢຊູຊົງເປັນຈອມເຈົ້ານາຍໃນຊີວິດປະຈໍາວັນ.

ພຣະກາຍຂອງພຣະຄຣິດນັ້ນເປັນພຣະກາຍດຽວທີ່ມີອະໄວຍະວະຫລາຍສ່ວນ ຫາກສ່ວນໜຶ່ງໃນພຣະກາຍສູນເສຍຂອງປະທານແລະຄວາມເຂົ້າໃຈທີ່ເປັນເອກະລັກໄປ ກໍເປັນເໝືອນເກືອທີ່ຂາດລົດເຄັມ. ໃນໜັງສື Differentiate or Die ແຈກ ທຣາວ (Jack Trout) ກ່າວວ່າ "ຫາກອົງການໜຶ່ງບໍ່ໄດ້ນໍາເອກະລັກໜຶ່ງນໍາມາສະເໜີ ອົງການນັ້ນຈະຕາຍ". ຄຣິດສະຕຽນແອນນາບັບຕິສມີຄວາມເຂົ້າໃຈເລິກເຊິ່ງໃນເລື່ອງຫຍັງແດ່ທີ່ຈະສະເໜີຕໍ່ຜູ້ອື່ນ ແລະຄຣິດສະຕຽນຈະຕ້ອງຮຽນຮູ້ຫຍັງແດ່ຈາກກຸ່ມອື່ນ.

ເຖິງແມ່ນວ່າໂຄງການແລະເປົ້າໝາຍອາດຈະປ່ຽນແປງໄດ້ ແຕ່ຄ່ານິຍົມທີ່ເປັນເອກະລັກທີ່ມີສ່ວນເສີມສ້າງອົງການຈະຖືວ່າເປັນເລື່ອງ "ສັກສິດ" ທີ່ບໍ່ຄວນປ່ຽນແປງ.[2] ແລ້ວຄ່ານິຍົມຫລັກທີ່ "ສັກສິດ" ຂອງແອນນາແບບຕິສຄຣິດສະຕຽນຄືອັນໃດ? ໜັງສືເຫລັ້ມນີ້ຈະອະທິບາຍຄ່ານິຍົມເຫລົ່ານີ້ໂດຍການກ່າວເຖິງຫລັກຄວາມເຊື່ອທີ່ເປັນແກນຫລັກ ໓ ຂໍ້ຄື:

**໑. ພຣະເຢຊູເປັນສູນກາງແຫ່ງຄວາມເຊື່ອຂອງເຮົາ.**

**໒. ຊຸມຊົນຄຣິດສະຕຽນເປັນສູນກາງແຫ່ງຊີວິດຂອງເຮົາ.**

**໓. ການເຮັດໃຫ້ຄືນດີກັນເປັນສູນກາງວຽກງານຕົ້ນຕໍຂອງເຮົາ.**

ການເປັນຄຣິດສະຕຽນໃນມຸມມອງຂອງແອນນາແບບຕິສ ເປັນສ່ວນປະສົມຂອງຄວາມເຊື່ອໃນພຣະເຢຊູ ການເປັນສ່ວນໜຶ່ງຂອງຊຸມຊົນຄຣິດສະຕຽນ ແລະການປະຕິບັດໃນແນວທາງທີ່ເຮັດໃຫ້ຄືນດີກັນ.[3] ຫລັກປະຕິບັດແລະຫລັກຄໍາສອນອັນສໍາຄັນບາງຢ່າງຂອງແອນນາບັບຕິສໄດ້ກາຍເປັນເລື່ອງຄຣິດສະຕຽນສ່ວນໃຫຍ່ຍອມຮັບ ແລະຖືວ່າເປັນເລື່ອງປົກກະຕິແລ້ວ ແຕ່ກໍຍັງມີຫລັກປະຕິບັດແລະຄໍາສອນອື່ນໆ ອາດຈະເປັນສິ່ງທ້າທາຍແລະສະຫລັບສັບຊ້ອນ ແຕ່ປະຈຸບັນມີຈໍານວນຄົນເພີ່ມຂຶ້ນເລື້ອຍໆ ທີ່ພົບວ່າຄວາມເຂົ້າໃຈແລະຫລັກປະຕິບັດຂອງແອນນາບັບຕິສ ເປັນປະໂຫຍດຫລາຍໃນການຊ່ວຍພວກເຂົາຕິດຕາມພຣະເຢຊູຄຣິດຢ່າງສັດຊື່ໃນຍຸກສະໄໝຂອງພວກເຮົາ.

ຄໍາບັນລະຍາຍ ໓ ຂໍ້ ຂອງໜັງສືເຫລັ້ມນີ້ເປັນການປັບປຸງໃໝ່ຈາກໜັງສື The Anabaptist Vision ຊຶ່ງເປັນໜັງສືບັນລະຍາຍຫລັກຂໍ້ເຊື່ອ ທີ່ຍອມຮັບກັນຢ່າງກວ້າງຂວາງ ຕັ້ງແຕ່ປີ ຄ ສ ໑໙໔໓ ໂດຍ ຮາໂຣດ ເບັນເດີ (Harold.S Bender) ປະທານສະມາຄົມປະຫວັດສາດຄຣິສຕະຈັກ ຂອງສະຫະລັດອາເມຣິກາ (American Society of Church History).[4] ໃນຂະນະນັ້ນ, ເບນເດີໄດ້ອະທິບາຍວ່າພຣະຄໍາ ແລະປະຫວັດສາດຂອງ ແອນນາບັບຕິສ ຕາມຄວາມເຂົ້າໃຈຂອງເຂົາດັ່ງນີ້:

໑. ການເປັນຄຣິດສະຕຽນຄື ***ການເປັນລູກສິດ*** ຕິດຕາມພຣະເຢຊູປະຈາວັນ.

໒. ຄຣິສຕະຈັກຄື ຄວາມເປັນພີ່ເປັນນ້ອງກັນ ຫລືເອີ້ນວ່າ ຄອບຄົວ ສະມາຊິກບໍ່ພຽງແຕ່ອຸທິດຕົວເອງໃຫ້ແກ່ພຣະຄຣິດ ແຕ່ຍັງອຸທິດຕົວເອງດ້ວຍໃຈສະມັກຕໍ່ກັນແລະກັນ.

໓. ຜູ້ຕິດຕາມພຣະເຢຊູມີ ***ຫລັກສັດຈະທັມແຫ່ງຄວາມຮັກ ແລະການບໍ່ໂຕ້ຕອບ*** ໃນຖານະທີ່ເປັນຄົນທີ່ຖືກສ້າງຂຶ້ນໃໝ່ ເປັນຜູ້ເຊື່ອມຸ້ງໝັ້ນຈະເຮັດໃຫ້ມີການຄືນດີກັນ ຊຶ່ງປະຕິເສດການມີສ່ວນໃນຄວາມຮຸນແຮງ ແລະສົງຄາມ.

ຄ່ານິຍົມຫລັກ 3ຂໍ້ນີ້ມີຈຸດເລີ່ມຕົ້ນຫລາຍແບບດ້ວຍກັນ ຊຶ່ງໜັງສືເຫລັ້ມນີ້ຈະອະທິບາຍຄ່ານິຍົມຂໍ້ຫລັກເຫລົ່ານີ້ເກີດມາໄດ້ຢ່າງໃດ. ຫລັງຈາກນັ້ນກໍຈະສະເໜີຄ່ານິຍົມເຫລົ່ານີ້ປຽບທຽບກັບຫລັກຂໍ້ເຊື່ອທີ່ແຕກຕ່າງຈາກແອນນາແບບຕິສ ພ້ອມກັບຄໍາຖາມເພື່ອອະທິບາຍ. ຂ້າພະເຈົ້າເຊື່ອວ່າ ຂ້າພະເຈົ້າໄດ້ເນັ້ນເຖິງກ່ຽວກັບດ້ານດີຂອງແອນນາບັບຕິສຍຸກທໍາອິດເອົາໄວ້ ແລະກ່າວເຖິງໃນດ້ານລົບຂອງເຂົາໜ້ອຍທີ່ສຸດ.

ເປົ້າໝາຍຂອງໜັງສືເຫລັ້ມນີ້ຄືໃຫ້ຜູ້ທີ່ສົງໃສມີໂອກາດຖາມ ແລະຕອບຄຳຖາມວ່າ "ຄຣິດສະຕຽນແອນນາບັບຕິສມີລັກສະນະເປັນຢ່າງໃດ?"

ຂ້າພະເຈົ້າຂໍຂອບໃຈເປັນພິເສດສຳຫລັບ Jeff Wright ອາດີດເປັນສາສນາຈານປະຈຳຂອງສະພາເມັນໂນໄນເຂດປະຊີຟິກຊາວແວສ (Pacific South West Conference) ທີ່ໄດ້ມີສ່ວນເລີ້ມຕົ້ນ. ນອກຈາກນັ້ນຂ້າພະເຈົ້າຂໍຂອບໃຈກັບກຸ່ມຄົນທີ່ມີຄວາມຫລາກຫລາຍທາງດ້ານສາສະໜາສາດທີ່ລວມເຖິງ Theodore a Weathers, David Martin, Jame Reimer, Andre Gingerich Stoner, Alan Kreider, Marlene Kropf, John Remple, Devid Pfrimmer, Neal Blough ແລະ James Krabill ທີ່ຊ່ວຍວິພາກວິຈານໜັງສືສະບັບແບບນີ້ຫລາຍສະບັບ. ຢ່າງໃດກໍຕາມ, ຂ້າພະເຈົ້າຂໍຮັບຜິດຊອບເນື້ອຫາຂອງໜັງສືເຫລັ້ມນີ້ທັງໝົດເພາະຮູ້ວ່າຄຣິດສະຕຽນຫລາຍຄົນຈະມີຈຸດຢືນທີ່ແຕກຕ່າງກັນກັບຂ້າພະເຈົ້າທີ່ພະຍາຍາມຈະບັນລະຍາຍໃນໜັງສືນີ້.

**ຫລັກຂໍ້ເຊື່ອທີ 1. ພຣະເຢຊູເປັນສູນກາງແຫ່ງຄວາມເຊື່ອຂອງເຮົາ**

ພຣະເຢຊູໄດ້ເລີ້ມພາລະກິດຂອງພຣະອົງໃນຊ່ວງ ຄ ສ ໓໐ ໂດຍການລວບລວມລູກສິດຈຳນວນໜຶ່ງຊຶ່ງໃຊ້ເວລາສາມປີ ທີ່ລູກສິດກຸ່ມນີ້ໄດ້ຮັບປະສົບການຊີວິດໃນການກິນ ແລະການທຳງານ, ດູແລເອົາໃຈໃສ່ຄົນອານາຖາ, ປິ່ນປົວຄົນເຈັບປ່ວຍ, ເຮັດໃຫ້ຄົນຕາບອດເຫັນຮຸ່ງ, ອະໄພໂທດໃຫ້ຄົນບາບແລະສັ່ງສອນຊຸມຊົນຢ່າງມາກມາຍ. ໃນໄລຍະເວລາທີ່ທຳພາລະກິດແລະຊ່ວງເວລາຫລັງຈາກຄືນພຣະຊົນ, ພຣະເຢຊູໄດ້ກາຍເປັນສູນກາງແຫ່ງຄວາມເຊື່ອໃນຊີວິດຂອງພວກເຂົາ. ພວກເຂົາໄດ້ຍອມຮັບວ່າພຣະເຢຊູເປັນພຣະອາຈານ, ເປັນພຣະຜູ້ໄຖ່ ແລະເປັນອົງພຣະຜູ້ເປັນເຈົ້າຂອງພວກເຂົາທີ່ແຕກຕ່າງກັບອາຈານ, ຜູ້ຊ່ວຍແລະເຈົ້ານາຍຄົນອື່ນໆ ໃນສະໄໝນັ້ນ.

ການເປັນຄຣິດສະຕຽນສຳຫລັບລູກສິດຍຸກທຳອິດມີຄວາມໝາຍໜັກແໜ້ນກວ່າການເປັນຜູ້ເຊື່ອ ຫລືເປັນພຽງແຕ່ຜູ້ນະມັດສະການແຕ່ເປັນຜູ້ທີ່ເຕັມໄປດ້ວຍພຣະວິນຍານບໍລິສຸດໃນຊີວິດຂອງພວກເຂົາ. ຖ້າຫາກວ່າທ່ານຖາມລູກສິດຍຸກທຳອິດ, ຂ້າພະເຈົ້າເຊື່ອວ່າພວກເຂົາຄົງຕອບຄຳຖາມດ້ວຍຄວາມກະຕືລືລົ້ນວ່າ *"ພຣະເຢຊູເປັນສູນກາງແຫ່ງຄວາມເຊື່ອຂອງເຮົາ!"*

ໃນຊ່ວງໄລຍະເວລາ ໔໕໐ ປີຄຣິດສະຕຽນຍຸກທຳອິດໄດ້ຍຶດຖືພຣະເຢຊູເປັນສູນກາງແຫ່ງຄວາມເຊື່ອທ່າມກາງພວກເຂົາ ຫລັງຈາກສັດຕະວັດຕໍ່ໆ ມາມີການປ່ຽນແປງເກີດຂຶ້ນຫລາຍຢ່າງໃນຄວາມເຊື່ອຂອງຄຣິດສະຕຽນເກືອບຈະກາຍເປັນສາດສະໜາອື່ນ. ໂດຍສະເພາະ ມີສອງທ່ານ ຊຶ່ງຍອມຮັບວ່າເປັນເຄື່ອງໝາຍທີ່ເຮັດໃຫ້ມີການປ່ຽນແປງເກີດຂຶ້ນ ຜູ້ໜຶ່ງເປັນນັກການເມືອງ ແລະອີກຜູ້ໜຶ່ງເປັນສາດສະໜາສາດ.

**ຄອນສະແຕນຕິນ** (Constantine) ເປັນນັກການເມືອງ,[6] ຄືຜູ້ນຳອານາຈັກໂຣມັນ ປະສົບການຝ່າຍວິນຍານຂອງທ່ານນີ້ຄື ທ່ານໄດ້ພົບເຫັນໃນມະໂນພາບ (ນິມິດ) ເປັນຮູບໄມ້ກາງແຂນ. ທ່ານຈຶ່ງຢຸດຂົ່ມເຫັງຄຣິດສະຕຽນ ແລະອະນຸຍາດໃຫ້ສາດສະໜາຄຣິດເປັນສາດສະໜາປະຈຳຊາດອານາຈັກໂຣມັນ. ເຖິງປານນັ້ນກໍຕາມ,ໃນຊ່ວງເວລາແຫ່ງການຄອບຄອງຂອງທ່ານ ແລະສັດຕະວັດຕໍ່ໆມາ, ຜູ້ທີ່ເຊື່ອໄດ້ຍຶດຖືຫລັກຂໍ້ເຊື່ອຫລາຍກວ່າການປະພຶດປະຕິບັດຕົນໃນຊີວິດປະຈຳວັນ.

**ອໍກັດສະຕິນ** (Augustine) ນັກສາດສະໜາສາດ [7] ເປັນບຸກຄົນສຳຄັນຕໍ່ມາຫລັງຈາກຄອນສະແຕນຕິນ. ທ່ານໄດ້ມີປະສົບການໃນການກັບໃຈຢ່າງເລິກເຊິ່ງ ຈົນບາງຄົນຂະໜານນາມທ່ານວ່າເປັນນັກສາດສະໜາສາດທີ່ຍິ່ງໃຫຍ່ທີ່ສຸດ ໃນຂົງເຂດຄຣິສຕະຈັກພາກຕາເວັນຕົກໂດຍການເຫັນແນວໂນ້ມ ແລະມຸມມອງໃໝ່ໆຂອງທ່ານ ທີ່ໄດ້ຂັດແຍ່ງກັບລູກສິດຍຸກທຳອິດແທນທີ່ຈະເນັ້ນໃນຊີວິດ ແລະພາລະກິດຂອງພຣະເຢຊູ ກັບໄປເນັ້ນເລື່ອງການຄືນພຣະຊົນຂອງພຣະອົງເປັນຫລັກໃນຄຣິສຕະຈັກ ຊຶ່ງເປັນຫລັກຄວາມເຊື່ອທີ່ເອີ້ນວ່າ ເປັນຂອງອັກຄະສາວົກ (Apostles' Creed) ທີ່ມີຄວາມສຳຄັນໃນສະໄໝນັ້ນບໍ່ໄດ້ກ່າວເຖິງຄຳສອນແລະພາລະກິດຂອງພຣະອົງ ແທນທີ່ຈະກ່າວວ່າ, *"ພຣະເຢຊູເປັນສູນກາງແຫ່ງຄວາມເຊື່ອຂອງເຮົາ"* ແຕ່ຄົນຕິດຕາມອໍກັດສະຕິນ ກ່າວວ່າ, *"ການສິ້ນພຣະຊົນຂອງພຣະເຢຊູເປັນສູນກາງແຫ່ງຄວາມເຊື່ອຂອງເຮົາ"*

ໄດ້ມີການປ່ຽນແປງຢ່າງມາກມາຍເກີດຂຶ້ນຄື ໃນຊ່ວງຂອງລູກສິດກຸ່ມນ້ອຍຍຸກທຳອິດທີ່ນະມັດສະການໃນທີ່ລັບ. ແຕ່ໃນເວລານີ້

ພວກເຂົາລວມຕົວກັນໃນຕຶກອາຄານທີ່ຍິ່ງໃຫຍ່ ຂະນະທີ່ຄຣິສຕະຈັກຍຸກທຳອິດກັບຜູ້ເຊື່ອໃໝ່, ຫລັງຈາກທີ່ໄດ້ຮັບຄຳສອນແລະໃຫ້ຮັບບັບຕິສະມາຜູ້ໃຫຍ່ເຂົ້າຮ່ວມກັບຊຸມຊົນ ຂະນະນີ້ມີການໃຫ້ບັບຕິສະມາເດັກເກີດໃໝ່ແລະປະຊາຊົນທຸກຄົນຍົກເວັ້ນ ຊາວຢິວທີ່ເປັນສ່ວນໜຶ່ງຂອງຄຣິສຕະຈັກທີ່ຂຶ້ນໂດຍກົງກັບລັດຖະບານ. ໃນຂະນະທີ່ຄຣິສຕະຈັກຍຸກທາອິດເນັ້ນໃນການຕິດຕາມພຣະເຢຊູ ແຕ່ຕອນນີ້ສິ່ງທີ່ເນັ້ນຄືຫລັກຄຳສອນທີ່ຖືກຕ້ອງ ພິທີກຳທີ່ລະອຽດແລະເນັ້ນເຖິງການປ້ອງກັນຕົວຈາກສັດຕູ ຕ່າງຈາກຄຣິສຕະຈັກຍຸກທຳອິດທີ່ແບ່ງປັນຄວາມເຊື່ອຂອງພວກເຂົາໃຫ້ກັບເພື່ອນບ້ານທຸກໆວັນ. ແຕ່ເວລານີ້ການປະກາດໝາຍເຖິງການຂະຫຍາຍອານາຈັກ "ຄຣິດສະຕຽນ" ຊຶ່ງຄຣິສຕະຈັກຍຸກທຳອິດສ່ວນໃຫຍ່ໄດ້ປະຕິເສດການປະກອບສ່ວນໃນການທະຫານ ພາຍຫລັງ ທ່ານ ອໍກັດສະຕິນ ເສຍຊີວິດແລ້ວມີພຽງແຕ່ຄຣິດສະຕຽນເທົ່ານັ້ນໄດ້ຮັບອະນຸຍາດໃຫ້ເຂົ້າປະກອບສ່ວນຂອງການທະຫານຂອງໂຣມັນໄດ້.

ຕໍ່ມາລະຫວ່າງປີ ຄ ສ ໑໔໐໐ ຫາ ໑໕໐໐ ມີສ່ວນບຸກຄົນແລະກຸ່ມຕ່າງໆ ເລີ້ມຮຽນຮູ້ ຄວາມເຂົ້າໃຈກ່ຽວກັບຄວາມລອດ ແລະຄຣິສຕະຈັກເລີ້ມຍອມຮັບມີຫລາຍຢ່າງທີ່ກຳລັງຂາດຫາຍໄປ. **ມາຕິນ ລູເທີ** (Martin Luther) ນັກບວດຂອງເຢຍລະມັນຄົນໜຶ່ງທີ່ໄດ້ຮຽນຮູ້ຫລັກສາດສະໜາສາດຂອງ ອໍກັດສະຕິນ ຢ່າງລະອຽດ. ທ່ານໄດ້ກາຍເປັນນັກປະຕິຮູບອີກຄົນໜຶ່ງໃນກຸ່ມ ອູນຣິຈ ສະວິງລີ (Ulrich Swingli) ທີ່ເປັນສິດຍາພິບານຄົນ ສະວິສ, ແລະ ຈອນ ເຄວິນ (John Calvin) ກໍເປັນກນັກປະຕິຮູບສາດສະໜາສາດຄົນໜຶ່ງທີ່ໄດ້ຮຽນຮູ້ຫລັກສາດສະໜາສາດ.

ລູເທີ ມີຄວາມຮູ້ສຶກຂັດເຄືອງໃຈເປັນພິເສດກັບການປະຕິບັດຊີວິດຕົນໃນຮູບແບບນັກບວດແລະການທີ່ສັນທະປາປາໃຫ້ອະໄພບາບ ແລະສັ່ງສອນເລື່ອງຄວາມລອດຄວບຢູ່ບົນພື້ນຖານການທຳດີພ້ອມກັບການຂາຍໃບຍົກໂທດບາບ. ໃນວັນທີ ໓໑/໑໐/໑໕໑໗ ທ່ານໄດ້ນຳການສະຫລຸບຂໍ້ເຊື່ອເຖິງ ໗໕ ຂໍ້ສື່ສານໃຫ້ສາທາລະນະຊົນເພື່ອຕ້ອງການໃຫ້ມີການໂຕ້ວາທີເກີດຂຶ້ນ ໂດຍການນຳເອົາຫລັກຂໍ້ເຊື່ອໄປຕອກໄວ້ທີ່ປະຕູໂບດແຫ່ງໜຶ່ງໃນເມືອງ ວິເທັນເບີກ ປະເທດເຢຍລະມັນ. ການປະຕິບັດຂອງທ່ານແມ່ນຈຸດເລີ້ມຕົ້ນປະຕິຮູບຂອງ ໂປຣແຕສແຕນ.[8]

ລູເທີ ແລະສະວິງລີ ຢັ້ງຢືນວ່າ ພຣະຄຳພີເປັນສິດທິອຳນາດດຽວທີ່ກ່ຽວຂ້ອງໃນເລື່ອງຄວາມເຊື່ອ ແລະການປະຕິບັດ ໂດຍການຢືນຢັນວ່າຄວາມລອດນັ້ນໄດ້ມາໂດຍພຣະຄຸນຄືຜ່ານທາງຄວາມເຊື່ອເທົ່ານັ້ນ. ຢ່າງໃດກໍຕາມ, ຄວາມລອດນັ້ນໝາຍເຖິງຊີວິດນິລັນ ບາງຄົນເອີ້ນສິ່ງເຫລົ່ານີ້ວ່າເປັນຄວາມລອດຂອງຈິດວິນຍານຫລາຍກວ່າຄວາມລອດໂດຍສົມບູນ ເຖິງແມ່ນວ່າຄຣິດສະຕຽນຈະຖືກເອີ້ນໃຫ້ຕອບສະໜອງການຮັບໃຊ້ພຣະເຈົ້າ ແລະເພື່ອນບ້ານຢ່າງສັດຊື່ ແຕ່ການຕິດຕາມພຣະເຢຊູໃນຊີວິດປະຈຳວັນພ້ອມກັບການຮັບໃຊ້ຊຶ່ງກັນແລະກັນໃນຊຸມຊົນຄຣິດສະຕຽນນັ້ນບໍ່ໄດ້ຖືກເນັ້ນຢ່າງພຽງພໍ.

ນັກສຶກສາຫລາຍຄົນຂອງ Ulrich Zwingli ຊຶ່ງລວມເຖິງ Conrad Grebel, Felix Manz ແລະ George Blaurock ໄດ້ລວມຕົວກັນເພື່ອສຶກສາພຣະຄຳພີເປັນປະຈຳໃນເມືອງ Zurich ປະເທດ ສະວິສເຊີແລນ. Hans Hut, Hans Denck, Pilgrim Marpeck ແລະJakob Hutter ກຸ່ມຄົນທີ່ກ່າວມານີ້ກໍໄດ້ສືບຕໍ່ຕາມແນວທາງນີ້ເຊັ່ນກັນທາງພາກໃຕ້ປະເທດເຢຍລະມັນ ແລະໂມຣະເວຍ. ຕໍ່ຈາກນັ້ນກໍມີ **ເມັນໂນໄຊມອນ** (Menno Simons) ອາດີດເປັນບາດຫລວງຂອງຄາໂທລິກໄດ້ສອນ ແລະຮ່ວມງານກັບກຸ່ມທີ່ເກີດຂຶ້ນໃໝ່ໃນປະເທດ ນີເທີແລນ.[9]

ກຸ່ມເຫລົ່ານີ້ໄດ້ຮຽນຮູ້ຈາກພຣະຄຳພີຢ່າງຕໍ່ເນື່ອງພວກເຂົາໄດ້ສຶກສາກ່ຽວກັບຊີວິດຂອງພຣະເຢຊູ ແລະພວກລູກສິດກຸ່ມແລກ ໂດຍອີງໃສ່ ພຣະຄຳເຮັບເຣີ ໑໒:໒ "ຈົ່ງປັກຕາເບິ່ງພຣະເຢຊູ ຄືຜູ້ບຸກເບີກຄວາມເຊື່ອ ແລະຜູ້ຊຶ່ງເຮັດໃຫ້ຄວາມເຊື່ອຂອງພວກເຮົາເຖິງທີ່ສຳເຣັດ" ຂໍ້ນີ້ໄດ້ກາຍເປັນພຣະຄຳພີທີ່ສຳຄັນຂອງຫລາຍໆຄົນ. ພ້ອມກັບພຣະຄຳ ໑ ໂກຣິນໂທ ໓:໑໑ "ເພາະວ່າຜູ້ໃດຈະວາງຮາກອື່ນອີກບໍ່ໄດ້ນອກຈາກຮາກທີ່ຊົງວາງໄວ້ແລ້ວນັ້ນຄືພຣະເຢຊູຄຣິດ" ພຣະຄຳພີເຫລົ່ານີ້ໄດ້ກາຍເປັນຄະຕິຂອງ ເມັນໂນ ໄຊມອນ. ໃນເວລານັ້ນ, ຄຳເທດສະໜາບົນພູເຂົາທີ່ເຕັມໄປດ້ວຍລິດອຳນາດຂອງພຣະວິນຍານບໍລິສຸດກາຍມາເປັນມາດຕະຖານຂອງການດຳເນີນຊີວິດຄຣິດສະຕຽນ.

ຄຣິດສະຕຽນ ແອນນາບັບຕິສ ກຸ່ມທຳອິດ ໄດ້ຢຶດຖືຫລັກຂໍ້ເຊື່ອຂອງອັກຄະສາວົກ ແລະປະຕິບັດຕາມຄຳສອນ, ການເທດສະໜາຂອງລູເທີ ແລະສະວິງລີ ແຕ່ພວກເຂົາຕ້ອງການໄປໄກກວ່ານັ້ນອີກ ພວກເຂົາເນັ້ນ "ການບັງເກີດໃໝ່" ຫລາຍກວ່າ "ໄດ້ຮັບຄວາມຊອບທັມໂດຍ

ຄວາມເຊື່ອ."    ເຖິງແມ່ນຄວາມລອດຈະມາຈາກພຣະຄຸນຂອງພຣະເຈົ້າ ແຕ່ພວກເຂົາຮຽກຮ້ອງໃຫ້ຜູ້ເຊື່ອມີການຕອບສະໜອງການເຊື່ອຟັງຫລາຍກວ່ານັ້ນ ຊຶ່ງຢືນຢັນວ່າ ຄວາມລອດທີ່ມາຈາກພຣະເຢຊູຄຣິດ   ແລະໂດຍລິດເດດຂອງພຣະວິນຍານບໍລິສຸດຈະຕ້ອງນຳໄປສູ່ການປ່ຽນແປງທາງດ້ານສິນລະທັມ ຊຸມຊົນ ແລະເສດຖະກິດຂອງບຸກຄົນເຫລົ່ານັ້ນ. ການບັບຕິສະມາຂອງຜູ້ໃຫຍ່ກາຍເປັນເຄື່ອງໝາຍເຖິງຄວາມລອດ ແລະການປ່ຽນແປງໄດ້ເກີດຂຶ້ນແລ້ວ ຖ້າທ່ານຖາມເຖິງຄຣິດສະຕຽນ ແອນນາບັບຕິສຍຸກທຳອິດນັ້ນ     ຂ້າພະເຈົ້າເຊື່ອວ່າ ພວກເຂົາຈະຕອບເໝືອນກັບລູກສິດພຣະເຢຊູຍຸກທຳອິດທີ່ກ່າວວ່າ *"ພຣະເຢຊູເປັນສູນກາງແຫ່ງຄວາມເຊື່ອຂອງພວກເຮົາ!"*

ສິ່ງທີ່ກ່າວມາທັງໝົດນີ້ມີຄວາມໝາຍຢ່າງໃດທີ່ກ່ຽວກັບເຮົາໃນປະຈຸບັນນີ້? ຄຣິດສະຕຽນ ແອນນາບັບຕິສ ໄດ້ມີທິດທາງໃນການມຸ້ງໜ້າທີ່ຈະນຳຄວາມເຂົ້າໃຈກ່ຽວກັບພຣະເຢຊູຄຣິດທີ່ຈະນຳມາໃຊ້ໃນຊີວິດປະຈຳວັນໃນ ໓ ຮູບແບບທີ່ຈະກ່າວດັ່ງຕໍ່ໄປນີ້:

**໑. ການຕິດຕາມພຣະເຢຊູຄຣິດໃນຊີວິດປະຈຳວັນ.**

ການເປັນຄຣິດສະຕຽນມີຄວາມໝາຍມາກກວ່າ  ການມີປະສົບການໃນຝ່າຍວິນຍານ   ການປັກຫລັກຄວາມເຊື່ອຫລືການເປັນຄົນຊອບທັມຕໍ່ພຣະເຈົ້າ ການເປັນຄຣິດສະຕຽນໝາຍເຖິງການຕິດຕາມພຣະເຢຊູຄຣິດໃນຊີວິດປະຈຳວັນ,  ຊຶ່ງການເປັນຄຣິດສະຕຽນໃນຮູບແບບ ແອນນາບັບຕິສເຫັນວ່າ "ການເປັນຄຣິດສະຕຽນຄືການເປັນລູກສິດ!" ໃນພາສາເຢຍລະມັນເອີ້ນວ່າ Nachfolge Chriti ຫລື  "ຕາມຫລັງພຣະຄຣິສໄປ" ແຮນເດັນ (Hans Denck) ຊຶ່ງເປັນແອນນາບັບຕິສກຸ່ມທຳອິດໄດ້ກ່າວໄວ້ຢ່າງຊັດເຈນວ່າ "ບໍ່ມີໃຜຮູ້ຈັກພຣະຄຣິດຢ່າງແທ້ຈິງຖ້າບໍ່ໄດ້ຕິດຕາມພຣະອົງໃນຊີວິດປະຈຳວັນ ແລະບໍ່ມີໃຜຕິດຕາມພຣະຄຣິສໄດ້ໃນຊີວິດປະຈຳວັນຖ້າບໍ່ຮູ້ຈັກພຣະອົງຢ່າງແທ້ຈິງ." [10]

ຄວາມເຂົ້າໃຈໃນຄວາມລອດຈອງແອນນາບັບຕິສທີ່ໄດ້ສືບທອດກັນມານັ້ນ ໝາຍເຖິງການປ່ຽນແປງຫົນທາງແຫ່ງຊີວິດແບບເກົ່າມາສູ່ຊີວິດທີ່ສະແດງໃຫ້ເຫັນວ່າພຣະເຢຊູເປັນສູນກາງແຫ່ງຄວາມເຊື່ອຂອງເຮົາ,     ແລະຄວນສະແດງອອກໃນການປະຕິບັດຂອງເຮົາເຖິງຄວາມລອດທີ່ແທ້ຈິງ ບໍ່ແມ່ນພຽງແຕ່ເຫັນການປ່ຽນແປງທັດສະນະຄະຕິຂອງພຣະເຈົ້າທີ່ມີຕໍ່ເຮົາເທົ່ານັ້ນ,   ແຕ່ເປັນການປ່ຽນແປງທັດສະນະຄະຕິຂອງເຮົາທີ່ມີຕໍ່ພຣະເຈົ້າ, ຕໍ່ຄົນອື່ນ ແລະຕໍ່ໂລກນີ້.   ການປ່ຽນແປງເຫລົ່ານີ້ຈະເປັນໄປໄດ້  ໂດຍການຊົງສະຖິດຢູ່ຂອງພຣະວິນຍານບໍລິສຸດທີ່ເປັນຜູ້ເສີມກຳລັງແກ່ລູກສິດໃນການຕິດຕາມພຣະເຢຊູໃນຊີວິດປະຈຳວັນ.

ຄຣິດສະຕຽນມາກມາຍຍັງມອງເຫັນວ່າຕົວເອງເປັນຄົນບາບ ທີ່ຊ່ວຍເຫລືອຕົວເອງບໍ່ໄດ້, ບໍ່ສາມາດໃຊ້ຊີວິດໃໝ່ທີ່ມີໄຊຊະນະຕໍ່ບາບໄດ້ ບາງຄົນເວົ້າວ່າ  "ຂ້ອຍບໍ່ໄດ້ເຫັນການປ່ຽນແປງ ຂ້ອຍພຽງແຕ່ໄດ້ຮັບການໃຫ້ອະໄພ".   ແຕ່ຄຣິດສະຕຽນແອນນາບັບຕິສບໍ່ໄດ້ມອງເຫັນເຊັ່ນນັ້ນ. ພວກເຂົາເຊື່ອວ່າຄຳສອນແລະຊີວິດພຣະເຢຊູເປັນສູນກາງແຫ່ງຄວາມເຊື່ອສາມາດຊ່ວຍໃຫ້ຜູ້ທີ່ມີຄວາມຕັ້ງໃຈຕິດຕາມປ່ຽນແປງ  ແລະເອົາຊະນະອຳນາດຂອງຄວາມຊົ່ວຮ້າຍໄດ້. ພວກເຂົາໄດ້ຮັບການໜູນໃຈໃຫ້ຕິດຕາມພຣະເຢຊູຢ່າງໜັກແໜ້ນໃນຊີວິດປະຈຳວັນ.

**໔. ພຣະເຢຊູເປັນຈຸດສູນກາງໃນການຕີຄວາມໝາມຂອງພຣະຄຳພີ**

ມີຄຣິດສະຕຽນຫລາຍຄົນໄດ້ຕີຄວາມໝາຍພຣະຄຳພີທີ່ເອີ້ນວ່າແບບ "ຮາບພຽງ" ຕາມການສັນນິຖານວ່າພຣະຄຳຂອງພຣະເຈົ້າທີ່ທ່ານ ໂມເຊໄດ້ບັນທຶກໄວ້ໃນພຣະຄຳພີເດີມນັ້ນມີສິດອຳນາດເທົ່າຄຳເວົ້າຂອງພຣະເຢຊູໃນພຣະຄຳພີໃໝ່.   ເມື່ອເກີດມີບັນຫາທາງດ້ານການເມືອງຫລືສັງຄົມເກີດຂຶ້ນເຊັ່ນວ່າ ສົງຄາມ ການຕັດສິນປະຫານຊີວິດ ຫລືການຕອບສະໜອງຕໍ່ຄົນທີ່ທຳຜິດ ຜູ້ທີ່ຕີຄວາມໝາຍແບບ "ຮາບພຽງ" ກໍມັກຈະອ້າງອີງເຖິງພຣະຄຳພີເດີມວ່າເປັນລະບຽບສິດທິອຳນາດສຳຫລັບຄວາມເຊື່ອ  ແລະການປະຕິບັດຂອງພວກເຂົາເຖິງແມ່ນວ່າຈະແຕກຕ່າງຈາກຄຳເວົ້າຂອງພຣະເຢຊູກໍຕາມ.  ເມື່ອເກີດມີຄາຖາມສ່ວນຕົວ ພວກທີ່ຕີຄວາມໝາຍແບບນີ້ມັກກັບໄປຫາຮູບແບບການນາຂອງພຣະບັນຍັດສິບປະການ ແທນທີ່ຈະຍອມຮັບໃຫ້ພຣະເຢຊູນຳພາໃນການຕີຄວາມໝາຍ.

ຄຣິດສະຕຽນຄົນອື່ນໆ ຕີຄວາມໝາຍພຣະຄຳພີໄປຕາມຮູບແບບທີ່ແບ່ງໄປຕາມຍູກສະໄໝ (Dispensational).     ການທີ່ຮູ້ຈັກນ້ຳພຣະໄທຂອງພຣະເຈົ້າຈະຕ້ອງຮູ້ຈັກຊ່ວງເວລາຫລືຍຸກສະໄໝທີ່ພຣະເຈົ້າຊົງເປີດເຜີຍໃນພຣະຄຳພີຂອງຕອນນັ້ນ.   ການຕີຄວາມໝາຍໃນຮູບແບບນີ້ຄືການເຊື່ອຟັງຄຳສອນພຣະເຢຊູທີ່ບົນພູເຂົານັ້ນ   ຕ້ອງລໍຖ້າຈົນກວ່າຈະເຖິງຍຸກອານາຈັກຂອງພຣະຄຣິດຫລັງຈາກທີ່ພຣະອົງສະເດັດກັບມາ,ໃນເວລານີ້ພວກເຂົານະມັດສະການພຣະເຢຊູ ແຕ່ພວກເຂົາບໍ່ໄດ້ເຊື່ອຟັງພຣະອົງໃນຊີວິດປະຈຳວັນ.

ຄຣິດສະຕຽນແອນນາບັບຕິສ ມອງເຫັນຮູບແບບການຕີຄວາມໝາຍພຣະຄຳພີທັງໝົດຄືມຸມມອງຂອງຈະລິຍະທັມທີ່ເຫັນວ່າພຣະເຢຊູເປັນສູນກາງແຫ່ງຄວາມເຊື່ອຂອງເຮົາ   ພວກເຂົາຍອມຮັບວ່າຊີວິດພຣະເຢຄຣິດຊົງເປັນການເປີດເຜີຍທີ່ສົມບູນແບບທີ່ສຸດກ່ຽວກັບພຣະເຈົ້າ ແລະຈຸດປະສົງທີ່ມາຈາກພຣະເຈົ້າຊຶ່ງໝາຍຄວາມວ່າໃນບາງກໍລະນີຄຳສອນຂອງພຣະເຢຊູຢູ່ເໜືອຄຳສອນທີ່ມາກ່ອນ.   ເຊັ່ນພຣະອົງຊົງກ່າວວ່າ "ທ່ານທັງຫລາຍໄດ້ຍິນຄຳທີ່ກ່າວໄວ້ແກ່ຄົນບູຮານວ່າ... ແຕ່ເຮົາບອກທ່ານທັງຫລາຍວ່າ..."  (ມທ ໕:໔໑,໔໕,໓໑,໓໓,໓໘ແລະ໔໓)   ບໍ່

ພຽງແຕ່ເທົ່ານັ້ນ, ຜູ້ຂຽນພຣະຄຳເຮັບເຣີ ໄດ້ກ່າວວ່າ, "ໃນສະໄໝກ່ອນພຣະເຈົ້າໄດ້ກ່າວໄວ້ຫລາຍຄັ້ງໃນວິທີຕ່າງໆ ແກ່ບັນພະບູລຸດຂອງເຮົາໂດຍທາງຜູ້ປະກາດພຣະທັມ ແຕ່ໃນວາລະສຸດທ້າຍນີ້ພຣະອົງໄດ້ກ່າວແກ່ເຮົາທາງພຣະບຸດ...ພຣະບຸດຊົງເປັນແສງສະທ້ອນສະພາບຂອງພຣະເຈົ້າ ແລະມີສະພາບແບບພິມດຽວກັນກັບພຣະອົງ..." (ເຮັບເຣີ ໑:໑-໓) ອັກຄະສາວົກ ປີເຕີ ແຄເລີ Peter Kehler ໄດ້ກ່າວວ່າ, "ຖ້າວ່າພຣະຄຳທັງໝົດສອນໃຫ້ຂ້າພະເຈົ້າຮູ້ຈັກພຣະເຢຊູຄຣິດເທົ່ານັ້ນກໍພຽງພໍແລ້ວ" [11]

ແອນນາບັບຕິສຄຣິດສະຕຽນເຊື່ອໝັ້ນວ່າພຣະຄຳພີທຸກຕອນໄດ້ຮັບການດົນໃຈທີ່ມາຈາກພຣະເຈົ້າ ແຕ່ຈະບໍ່ເຊື່ອຕາມຕົວອັກສອນທີ່ເຈາະຈົງ ພວກເຂົາຍອມຮັບພຣະຄຳທີ່ຂຽນເປັນຕົວອັກສອນ, ແຕ່ຕ້ອງສຳພັນກັບຈິດວິນຍານຂອງພຣະຄຣິດ. ພຣະຄຳພີທຸກຕອນຕ້ອງຕີຄວາມໝາຍໄປກັບຊີວິດພຣະເຢຊູ. ຄຣິດສະຕຽນຈະພົບບັນຫາເມື່ອຍົກພຽງແຕ່ພຣະຄຳທີ່ຂຽນເປັນຕົວອັກສອນເໜືອກວ່າພຣະເຢຊູ ຫລືຍົກພຣະເຢຊູເໜືອກວ່າພຣະຄຳ. ພຣະຄຳແລະພຣະເຢຊູຈຳເປັນຕ້ອງຜູກພັນກັນ.[12]

ແອນນາບັບຕິສຄຣິດສະຕຽນມອງເຫັນວ່າ ພຣະຄຳເປັນບໍ່ເກີດຂອງຂໍ້ມູນທີ່ສຳຄັນທີ່ສຸດ. ແຕ່ພຣະເຢຊູຍັງຄົງເປັນສິດທິອຳນາດສູງສຸດທີ່ກ່ຽວຂ້ອງກັບຄວາມເຊື່ອແລະຊີວິດ. ພຣະອົງຍັງຊົງເປັນອົງພຣະຜູ້ເປັນເຈົ້າທີ່ເໜືອກວ່າຕົວອັກສອນ ແລະເປັນມາດຕະຖານຂອງສິນລະທັມສ່ວນຕົວ ແລະສັງຄົມ. ບໍ່ມີຄຳເວົ້າໃດໆທີ່ຖ່າຍທອດອອກໄປຢ່າງສັດຊື່ປະກອບດ້ວຍລິດເດດທີ່ເໜືອຄຳສອນຂອງພຣະເຢຊູ ຊຶ່ງຍອມຮັບວ່າເປັນສູນກາງແຫ່ງຄວາມເຊື່ອຂອງພວກເຮົາ. ດັ່ງນັ້ນ, ເມື່ອແອນນາບັບຕິສຄຣິດສະຕຽນປະສົບບັນຫາທາງດ້ານສິນລະທັມ ພວກເຂົາຈະມອງໄປທີ່ພຣະເຢຊູກ່ອນເພື່ອໃຫ້ພຣະອົງຊົງນຳທາງ ຕໍ່ຈາກນັ້ນຈຶ່ງສຶກສາພຣະຄຳຕອນອື່ນໆ. ໃນການສຶສາຂໍ້ມູນເບື້ອງຫລັງເພື່ອສ້າງຄວາມເຂົ້າໃຈເພີ້ມເຕີມ. ຖ້າຫາກພົບວ່າພຣະຄຳພີ ສອງຕອນມີຂໍ້ຂັດແຍ່ງກັນພວກເຂົາຈະໃຫ້ຊີວິດພຣະເຢຊູເປັນການຕັດສິນ!

**໓. ຍອມຮັບວ່າພຣະເຢຊູຊົງເປັນອົງພຣະຜູ້ເປັນເຈົ້າ ແລະເປັນພຣະຜູ້ຊ່ວຍໃຫ້ລອດ**

ຄຣິດສະຕຽນມາກມາຍປະກາດຕົນຍອມຮັບວ່າ ພຣະເຢຊູຊົງເປັນພຣະຜູ້ຊ່ວຍໃຫ້ລອດຈາກຄວາມຜິດບາບ ແຕ່ກັບອ່ອນກຳລັງກັບການຕິດຕາມພຣະອົງ ແລະຍອມຮັບວ່າພຣະອົງເປັນອົງພຣະຜູ້ເປັນເຈົ້າໃນຊີວິດປະຈຳວັນ. ພວກເຂົາເຫັນວ່າພຣະເຢຊູເປັນພຣະຜູ້ຊ່ວຍໃຫ້ລອດຈາກນິໄສທີ່ບໍ່ດີ ແຕ່ເມື່ອປະສົບກັບບັນຫາໃຫຍ່ທາງດ້ານການເມືອງ ຫລືສັງຄົມ. ພວກເຂົາກັບມອບຄວາມເຊື່ອປະຈຳວັນໃຫ້ກັບນາຍຈ້າງ ຜູ້ນຳສັງຄົມ ຜູ້ບັນຊາການທະຫານ ຫລືປະທານາທິບໍດີ. ຜົນທີ່ຕາມມາກໍຄືຄຣິດສະຕຽນຫລາຍຄົນໃນຍຸກປະຈຸບັນເຊື່ອຟັງຄຳສັງສອນຂອງຜູ້ນຳທີ່ເປັນມະນຸດຫລາຍກວ່າຟັງຄຳສັ່ງຂອງພຣະເຢຊູ.

ແອນນາບັບຕິສຄຣິດສະຕຽນເຊື່ອວ່າການເຊື່ອຟັງລັດຖະບານຈະຕ້ອງຢູ່ໃນຂອບເຂດຂອງຄວາມເປັນຄຣິດສະຕຽນທີ່ສາມາດອະນຸຍາດໃຫ້ເຮັດໄດ້. ລັດຖະບານມີຈຸດປະສົງ ແລະມຸ້ງໝາຍທີ່ຈະຮັກສາຊີວິດ ແລະລະບຽບການປົກຄອງໃນໂລກນີ້. ແຕ່ການເຊື່ອຟັງກົດໝາຍບໍ່ໄດ້ໝາຍຄວາມວ່າເຮົາຈະເຊື່ອຟັງລັດຖະບານສັ່ງແບບຫລັບຫູຫລັບຕາສັ່ງ, ເນື່ອງຈາກວ່າຄວາມຊື່ສັດຂອງເຮົາໄດ້ໃຫ້ກັບພຣະເຢຊູ ແລະແຜ່ນດິນຂອງພຣະເຈົ້າ ອາດຈະມີບາງຄັ້ງທີ່ເຮົາອາດຂັດແຍ່ງຕໍ່ຄຳສັ່ງຂອງລັດຖະບານເພາະບໍ່ຕົງກັບຄຳສອນຂອງພຣະເຢຊູ ທີ່ເປັນສູນກາງແຫ່ງຄວາມເຊື່ອຂອງພວກເຮົາ ເມື່ອເກີດມີການຂັດແຍ່ງລະຫວ່າງການຊີ້ນຳຂອງພຣະເຢຊູ ແລະຈັກກະພັດຊີຊາ ເຮົາກໍຈະຕ້ອງຕອບແບບດຽວກັນກັບລູກສິດຍຸກທຳອິດວ່າ, "ເຮົາຈະຕ້ອງເຊື່ອຟັງພຣະເຈົ້າຫລາຍກວ່າເຊື່ອຟັງມະນຸດ" [13] (ກິດຈະການ ໕:໒໙)

ສະຫລຸບຄວາມແລ້ວແອນນາບັບຕິສຄຣິດສະຕຽນຄື ຜູ້ທີ່ເຊື່ອແລະມຸ້ງໝັ້ນທີ່ຈະເຮັດຄື:

໑. ຕິດຕາມພຣະເຢຊູຄຣິດໃນຊີວິດປະຈຳວັນ.

໒. ຕີຄວາມໝາຍພຣະຄຳພີໂດຍອີງໃສ່ພຣະເຢຊູເປັນສູນກາງແຫ່ງຄວາມເຊື່ອ.

໓. ສັນຍາວ່າຈະຊື່ສັດຕໍ່ພຣະເຢຊູຄຣິດ.

*ພຣະເຢຊູຄຣິດເປັນສູນກາງແຫ່ງຄວາມເຊື່ອຂອງພວກເຂົາ.* ແລ້ວພວກທ່ານ ເປັນຄຣິດສະຕຽນໃນຮູບແບບແອນນາບັບຕິສຫລືຍັງ?

**ຫລັກຂໍ້ເຊື່ອທີ ໒: ຊຸມຊົນຄຣິດສະຕຽນເປັນສູນກາງແຫ່ງຊີວິດຂອງພວກເຮົາ**

ພຣະເຢຊູໄດ້ເລີ້ມພາລະກິດຂອງພຣະອົງສິ່ງແລກຄື ການສ້າງຊຸມຊົນຂຶ້ນມາ ພຣະອົງໄດ້ຊົງເອີ້ນເອົາ ເປໂຕ ອັນເດອາ ແລະຢາໂກໂບກັບໂຢຮັນໃຫ້ມາຮ່ວມກັບພຣະອົງ ຕໍ່ມາກໍມີຜູ້ຕິດຕາມພຣະອົງຢ່າງຫລວງຫລາຍ ແລ້ວພຣະອົງໄດ້ເລືອກເອົາສາວົກສິບສອງຄົນ ພວກເຂົາໄດ້ຮຽນຮູ້, ຮັບປະທານອາຫານຮ່ວມກັບພຣະອົງ ເດີນທາງແລະຮັບໃຊ້ຮ່ວມກັນຈົນເຖິງວັນເພັນເຕຄໍອດ ທີ່ໄດ້ກາຍມາເປັນແກນຫລັກຂອງສັງຄົມໃໝ່ຊຶ່ງເອີ້ນວ່າ "ຄຣິສຕະຈັກ" ເຮົາໄດ້ພົບກຸ່ມທີ່ເຊື່ອທຳອິດໄດ້ເກີດຂຶ້ນຢູ່ໃນ ກິດຈະການ ບົດທີ ໒ ເຮົາພົບວ່າກຸ່ມທຳອິດນີ້ "ຮ່ວມປະຊຸມກັນທຸກ

ວັນ" ບໍ່ສະເພາະແຕ່ "ໃນພຣະວິຫານ" ເທົ່ານັ້ນ "ໃນບ້ານຂອງພວກເຂົາ" ພວກເຂົາຮັບປະທານອາຫານ "ດ້ວຍຄວາມຍິນດີແລະມີໃຈເອື້ອເຟື້ອເພື່ອແຜ່, ສັນລະເສີນພຣະເຈົ້າແລະມີຄວາມຊື່ນຊົມຍິນດີຮ່ວມກັບປະຊາຊົນຢ່າງກວ້າງຂວາງ"

ຄຣິສຕະຈັກໃນພຣະສັນຍາໃໝ່ກາຍມາເປັນການດຳເນີນຊີວິດທີ່ແຕກຕ່າງຈາກຄວາມຈິງທາງດ້ານສາດສະໜາ ແລະການເມືອງໃນເວລານັ້ນ. ຮູບແບບຊີວິດໃໝ່ນີ້ໄດ້ຖືກສອນ ແລະສະເຫລີມສະຫລອງໃນລານພຣະວິຫານ ແລະກຸ່ມຍ່ອຍທີ່ບ້ານຊຶ່ງມີການສົນທະນາກັນ ແລະໄດ້ນຳສິ່ງເຫລົ່ານັ້ນໄປປະຕິບັດ.

ພຣະເຢຊູໄດ້ໃຊ້ຄຳເວົ້າແບບຄອບຄົວມາໃຊ້ກັບຜູ້ຄົນທີ່ຕິດຕາມພຣະອົງ ຊຶ່ງເຫັນໄດ້ວ່າພຣະເຢຊູຕ້ອງການໃຫ້ຜູ້ທີ່ຕິດຕາມພຣະອົງບໍ່ພຽງແຕ່ແຕ່ເຊື່ອໃນພຣະອົງເທົ່ານັ້ນ, ແຕ່ຕ້ອງການຄົນເຫລົ່ານັ້ນສາມັກຄີຜູກພັນກັນຫລາຍຂຶ້ນທີ່ເຮັດໃຫ້ຄົນອື່ນໆປະຫລາດໃຈວ່າພຣະເຈົ້າໄດ້ສະຖິດໃນກຸ່ມຄຣິດສະຕຽນຍຸກທຳອິດ ແລະໄດ້ທຳງານຜ່ານພວກເຂົາ. ພວກເຂົາມີຂອງປະທານມີຄວາມຄິດເຫັນ ແລະມີຄວາມກ້າຫານທີ່ຈະສື່ຜ່ານສິ່ງທີ່ພຣະເຢຊູໄດ້ຊົງເລີ່ມເອົາໄວ້ ໃນຂະນະທີ່ພຣະອົງຍັງຢູ່ກັບພວກເຂົາ. ຖ້າເຮົາຫາກຖາມຄົນທີ່ຕິດຕາມພຣະອົງກຸ່ມທຳອິດພວກເຂົາຄົງຕອບວ່າ *"ຊຸມຊົນຄຣິດສະຕຽນເປັນສູນກາງແຫ່ງຊີວິດຂອງເຮົາ".*

ແທນທີ່ຈະເນັ້ນວ່າຄຣິສຕະຈັກເປັນຄອບຄົວຂອງຜູ້ທີ່ເຊື່ອ ລວມທັງຊາຍແລະຍິງທີ່ມາຮ່ວມກັນເພື່ອສຶກສາພຣະຄຳ,ມີການແບ່ງປັນອະທິຖານແລະນະມັດສະການ, **ຄອນສະແຕນຕິນ** ກັບໃຫ້ຄວາມສຳຄັນໃນການປະຊຸມໃຫຍ່ໃນພຣະວິຫານທີ່ມີຄວາມຜູກພັນກັບຜູ້ຮັ່ງມີທີ່ເຄີຍຕໍ່ຕ້ານການເປັນຄຣິດສະຕຽນ ຕ່າງກໍມີຄວາມເຕັມໃຈເຂົ້າຮ່ວມຄຣິສຕະຈັກທີ່ກ່ຽວຂ້ອງກັບຈັກກະພັດ ຄົນເປັນຈຳນວນມາກໄດ້ຮັບບັບຕິສະມາ ບໍ່ວ່າເຂົາຈະຕິດຕາມພຣະເຢຊູແທ້ຫລືບໍ່. ຜົນທີ່ຕາມມາຄືແທນທີ່ຄຣິສຕະຈັກຈະເຂົ້າໄປຢູ່ໃນໂລກ ແຕ່ "ໂລກ" ກັບເຂົ້າມາຢູ່ໃນຄຣິສຕະຈັກ.

ໂດຍການອຸ້ມຊູ ແລະຊ່ວຍເຫລືອຈາກພະມານດາ ກະສັດຄອນສະແຕນຕິນ ເລີ້ມສ້າງພຣະວິຫານຂະໜາດໃຫຍ່ໃນກຸງໂຣມ ແລະສະຖານທີ່ ທີ່ພຣະເຢຊູໄດ້ບັງເກີດ ແລະສິ້ນພຣະຊົນໃນທີ່ສຸດກໍມີການສ້າງຄຣິສຕະຈັກຂຶ້ນໃນທຸກໆເມືອງ ແທນທີ່ຈະເອີ້ນວ່າ "ຊຸມຊົນຂອງພຣະຄຣິດເປັນສູນກາງ ເປັນສູນກາງແຫ່ງຊີວິດຂອງພວກເຮົາ" ຄຣິດສະຕຽນເລີ້ມກ່າວວ່າ "ຕຶກອາຄານຄຣິສຕະຈັກເປັນສູນກາງຂອງເມືອງພວກເຮົາ."

**ອໍກັດສະຕິນ** ຖືກທ້າທາຍໃນການດາລົງຊີວິດທີ່ເຊື່ອຟັງພຣະເຈົ້າ ຖາມກາງຝູງຊົນທີ່ຖືວ່າທຸກຄົນເປັນຄຣິດສະຕຽນສຳຫລັບ ອໍກັດສະຕິນ ແລະຜູ້ຕິດຕາມທ່ານ ກາຍເປັນເລື່ອງທີ່ເປັນໄປບໍ່ໄດ້ທີ່ຈະແຍກສ່ວນໜຶ່ງໃນພຣະກາຍຂອງພຣະຄຣິດອອກມາຈາກຜູ້ທີ່ບໍ່ໄດ້ເປັນສ່ວນໜຶ່ງຂອງພຣະຄຣິດ ທ່ານກ່າວວ່າ "ເຂົ້າ ແລະຫຍ້າໄດ້ເຕີບໃຫຍ່ຂຶ້ນພ້ອມກັນ"

ແທນທີ່ຈະມີປະສົບການກັບການຊົງສະຖິດຂອງພຣະຄຣິດໃນຊຸມຊົນ, ພິທີທາງສາດສະໜາໄດ້ຖືກສ້າງຂຶ້ນຊຶ່ງກ່ຽວຂ້ອງກັບການໃຫ້ອະໄພບາບນັ້ນຈະຕ້ອງອາໄສພິທີປະຕິຍານຕົນ (Sacrament) ຫລືພິທີບັບຕິດສະມາ ເພື່ອຈະໄດ້ຮັບການອະໄພໂທດບາບທີ່ຕໍ່ເນື່ອງກັນຜູ້ເຊື່ອຕ້ອງອາໄສພິທີມາສ (Mass) ຫລາຍສັດຕະວັດຜ່ານໄປເກີດມີຄວາມເຂົ້າໃຈຜິດຂຶ້ນວ່າເພື່ອຈະໄດ້ຮັບການປົດປ່ອຍຈາກນາລົກ ເຮົາຕ້ອງອະທິຖານຕໍ່ນັກບຸນ, ຊ່ວຍເຫລືອຄົນຍາກຈົນ ແລະຕ້ອງຊື້ໃບໄຖ່ບາບຈາກສັນທະປະປາ.

ວັນເວລາໄດ້ຜ່ານໄປ ຄວາມຄິດກ່ຽວກັບການເປັນສ່ວນໜຶ່ງຂອງພຣະຄຣິດ ແລະຄວາມຜູກພັນຕໍ່ກັນແລະກັນຊຶ່ງເຄີຍມີມາໃນກຸ່ມນ້ອຍກໍຄ່ອຍໆຫາຍໄປ. ພວກທີ່ຕ້ອງຕິດຕາມພຣະເຢຊູຢ່າງສັດຊື່ແລະຢາກມີປະສົບການໃນຊຸມຊົນທີ່ມີຄວາມຜູກພັນ, ກາຍມາເປັນນັກບວດແລະແມ່ຊີທີ່ອາໃສຢູ່ໃນອາຄານ ຫລືຄອນແວນ ຈຶ່ງເກີດມີຄວາມເຂົ້າໃຈວ່າການທີ່ເຊື່ອພຣະເຢຊູ ແລະການເປັນສ່ວນໜຶ່ງໃນຊຸມຊົນຜູ້ທີ່ເຊື່ອໃນຊີວິດປະຈຳວັນເປັນສິ່ງທີ່ເປັນໄປບໍ່ໄດ້ສຳຫລັບຄົນທົ່ວໄປ.

**ມາຕິນ ລູເທີ** ແລະນັກປະຕິຮູບຄົນອື່ນໆຄັ້ງແລກມີຄວາມຕັ້ງໃຈປະຕິຮູບຄຣິສຕະຈັກໃຫ້ກັບໄປຢູ່ບົນພື້ນຖານຂອງພຣະຄຳພີພວກເຂົາໄດ້ແຍກຕົວອອກຈາກການຄອບຄອງຂອງອຳນາດໂຣມ ແລະເມື່ອສັ່ງສອນເທດສະໜາພຣະຄຳພີ ພວກເຂົາເລີ້ມຢໍ້າວ່າ ຜູ້ເຊື່ອທຸກຄົນເປັນຜູ້ຮັບໃຊ້. ຜູ້ທີ່ຕິດຕາມ ລູເທີ ແລະສະວິງລີ ກໍຕ້ອງການຄວາມເປັນອິດສະລະອອກຈາກລະບົບເຈົ້າຂຸນມູນນາຍຂອງສະໄໝນັ້ນ. ແຕ່ເມື່ອຊາວນາບາງຄົນລຸກຂຶ້ນຕໍ່ສູ້ກັບຫລັກການປະຕິບັດທີ່ບໍ່ຍຸດຕິທັມຂອງເຈົ້າຂຸນມູນນາຍ ລູເທີ ແລະສະວິງລີ ຢາກຈະເຫັນຄວາມສະຫງົບສຸກກັບມາເໝືອນເດີມພວກເຂົາຈຶ່ງເຂົ້າຂ້າງກັບພວກຜູ້ປົກຄອງ. ເຖິງແມ່ນວ່າພວກເຂົາຈະຊຸກຍູ້ຜູ້ນຳໃຫ້ຮັບຜິດຊອບຕໍ່ຄົນຍາກຈົນ ແຕ່ພວກເຂົາໄດ້ເຊື່ອມຄວາມສຳພັນລະຫວ່າງຄຣິສຕະຈັກຂຶ້ນມາໃໝ່ອີກຄັ້ງໜຶ່ງໂດຍບໍ່ໄດ້ຕັ້ງໃຈ. ຈຶ່ງເຮັດໃຫ້ສູນເສຍຄວາມເຊື່ອຖື ແລະຄວາມໄວ້ວາງໃຈຈາກຊາວນາເປັນຈຳນວນຫລວງຫລາຍ.

ສິງຄາມຊາວນາ ແລະຄວາມກົດດັນຈາກການເມືອງໄດ້ຢັບຢັ້ງບໍ່ໃຫ້ ລູເທີ ແລະສະວິງລີ ດຳເນີນການປະຕິຮູບທີ່ຕັ້ງໃຈໄວ້. ພວກເຂົາຫັນໄປໃຊ້ໂຄງຮ່າງແບບຂອງ ຄອນສະແຕນຕິນຄືເກົ່າ ແລະໃຊ້ສາດສະໜາແບບ ອໍກັດສະຕິນ, ພວກເຂົາພ້ອມທີ່ຈະຮັກສານະໂຍບາຍຄຣິສຕະຈັກ ແລະອະນຸຍາດໃຫ້ລັດໃຊ້ດາບຕໍ່ຜູ້ກະທຳຜິດ ແລະການຕີຄວາມໝາຍພຣະຄຳພີແບບຮາບພຽງເປັນເລື່ອງສ່ວນຕົວ ເພື່ອຮຽນຮູ້ນ້ຳພຣະໄທພຣະເຈົ້າ.

ແອນນາບັບຕິສຍຸກທຳອິດ, ລວມທັງ **ເມັນໂນໄຊມອນ** ພາກັນຜິດຫວັງກັບຄວາມຜິດພາດໃນເລື່ອງການປະຕິຮູບ. ພວກເຂົາບໍ່ເຄີຍຄິດເຖິງທີ່ຈະກັບໄປສູ່ຮູບແບບຄອນສະແຕນຕິນ ແລະສາດສະໜາສາດຂອງອໍກັດສະຕິນ ແຕ່ຕ້ອງການຢາກເຫັນການ *ຟື້ນຟູ* ຄຣິສຕະຈັກໃຫ້ກັບໄປສູ່ຮູບແບບໃນພຣະຄຳພີພາກພຣະສັນຍາໃໝ່. ພວກເຂົາເຊື່ອວ່າຄຣິສຕະຈັກເປັນສັງຄົມທີ່ເອກະເທດ ແລະແຕກຕ່າງຈາກສັງຄົມໂລກ.

ເນື່ອງຈາກມີການຂົ່ມເຫັງຄຣິດສະຕຽນກຸ່ມແອນນາບັບຕິສກຸ່ມທຳອິດໄດ້ຖືກບັງຄັບໃຫ້ໄປປະຊຸມໃນທີ່ລັບເພື່ອສຶກສາພຣະຄຳພີ, ມີການແບ່ງປັນອະທິຖານ ແລະນະມັດສະການໃນບ້ານ ແລະທີ່ປະຊຸມລັບພວກເຂົາໄດ້ຮັບປະສົບການທີ່ເຫັນວ່າການຊົງສະຖິດຂອງພຣະເຢຊູຢູ່ທ່າມກາງພວກເຂົາຫລາຍຄັ້ງ. ເມື່ອມີຄົນເຊື່ອ ແລະວາງໃຈໃນພຣະເຢຊູຄຣິດແລະສັນຍາວ່າຈະຕິດຕາມພຣະອົງໃນຊີວິດປະຈຳວັນ, ພວກເຂົາໄດ້ຮັບບັບຕິສະມາ ແລະການຕ້ອນຮັບເຂົ້າສູ່ທີ່ປະຊຸມທີ່ເຈາະຈົງ ພວກເຂົາມີຄວາມຜູກພັນກັນຢ່າງແໜ້ນແຟ້ນ.

ກຸ່ມນ້ອຍນີ້ໄດ້ກາຍເປັນພະຍານຢ່າງມີພະລັງອຳນາດໃນຊຸມຊົນຂອງພວກເຂົາຫລັງຈາກທີ່ໄດ້ສຶກສາຫລັກວິທະຍານິພົນລະດັບປະລິນຍາເອກ ໜ໌໘ ສະບັບກ່ຽວກັບຈຸດເລີ້ມຕົ້ນ ແລະຄວາມຄິດຂອງແອນນາບັບຕິສ. ອາຈານ ທາກາຊິ ຢາມາດາ (Takashi Yamada) ຜູ້ເປັນສິດຍາພິບານ ແລະນັກວິຊາການຈາກປະເທດຍີ່ປຸ່ນເຊື່ອວ່າ “ເອກະລັກຂອງຄຣິສຕະຈັກຍຸກແລກ ແລະແອນນາບັບຕິສຍຸກທຳອິດກໍຄື ພວກເຂົາພົບກັນໃນກຸ່ມຍ່ອຍ, ມີການພົບປະໜ້າຕໍ່ໜ້າກັນເຮັດໃຫ້ພວກເຂົາເຂັ້ມແຂງພໍທີ່ຈະອອກໄປປະເຊີນກັບໂລກນີ້ໄດ້.” [14]

ແອນນາບັບຕິສຄຣິດສະຕຽນໄດ້ກ່າວໄວ້ຢູ່ເລື້ອຍໆ ເຖິງພະລັງໃນການໃຊ້ຊີວິດໃນສະຖານທີ່ຕ່າງໆ. ພວກເຂົາຄາດຫວັງ “ຊີວິດທີ່ຊອບທັມ” ຈາກສະມາຊິກທຸກຄົນໂດຍສະເພາະຜູ້ນຳຕ້ອງເປັນແບບຢ່າງ ບໍ່ພຽງແຕ່ໄດ້ຮັບອິດສະລະພາບຈາກຄວາມຜິດບາບ. ພວກເຂົາອະທິບາຍວ່າຄຣິດສະຕຽນທີ່ສັດຊື່ ຄືຜູ້ທີ່ມີຊີວິດທີ່ເຕັມລົ້ນໄປດ້ວຍພຣະວິນຍານບໍລິສຸດ ແລະມີຈະລິຍະທັມ. ຜູ້ທີ່ເລີກຕິດຕາມພຣະເຢຊູປະຈຳວັນຫລືຍັງບໍ່ມີຊີວິດທີ່ເໝືອນກັບພຣະເຢຊູ ກໍຖືກຕັດອອກຈາກພຣະກາຍຂອງພຣະຄຣິດ.

ພວກແອນນາບັບຕິສຄຣິດສະຕຽນເຫັນວ່າ ຄຣິສຕະຈັກຕ້ອງປະກອບດ້ວຍຜູ້ທີ່ເຊື່ອທີ່ໄດ້ຮັບການປ່ຽນແປງ ຊຶ່ງມີຄວາມຜູກພັນຕໍ່ກັນ ແລະກັນໃນຊຸມຊົນແຫ່ງພຣະສັນຍາ ແຕ່ຜູ້ນຳໂປຣແຕສແຕນ ແລະຄາໂທລິກເຫັນວ່າກຸ່ມແອນນາບັບຕິສເປັນພິດໄພຕໍ່ສະຖາບັນຄຣິສຕະຈັກ. ຜົນທີ່ຕາມມາ ພວກເຂົາຕ້ອງຖືກຈັບຂັງຄຸກແລະຖືກການຂົ່ມເຫັງຢ່າງຮ້າຍແຮງຕໍ່ແອນນາບັບຕິສ. ຫລາຍກວ່າ ໔໐໐໐ ຄົນຖືກຈັບຖ່ວງນໍ້າ, ຕັດຫົວ ແລະຖືກມັດຕິດກັບເສົາເຜົາທັງເປັນ ພວກເຂົາເປັນຜູ້ທີ່ຍອມຕາຍເພື່ອຄວາມເຊື່ອ.[15]

ໃນຊ່ວງທຳອິດ ກຸ່ມແອນນາບັບຕິສມີຄວາມຫລາກຫລາຍຢ່າງມາກມາຍ ຜູ້ນຳຫລາຍຄົນໄດ້ເນັ້ນເຖິງຍຸກສຸດທ້າຍຫລາຍເກີນໄປ, ບາງຄົນໄດ້ໃຊ້ຄວາມຮຸນແຮງຊຶ່ງມີກຸ່ມໜຶ່ງໃນເມືອງ ມັນສະເຕີ (Munster) ປະເທດເຢຍລະມັນ ໄດ້ເຮັດຄວາມຮຸນແຮງຈົນມີການປົດສະມາຊິກສະພາເມືອງອອກ ແລະໃຫ້ໃຊ້ອາວຸໂສ ໑໔ ຄົນ ທີ່ເຂົາປະກາດຕົວວ່າເປັນອິດສະຣາເອນໃໝ່ ພວກເຂົາອະນຸຍາດໃຫ້ມີເມຍຫລາຍຄົນ ແລະໃຫ້ໃຊ້ອາວຸດເພື່ອປ້ອງກັນຕົວເອງ ເລື່ອງຢ່າງນີ້ໄດ້ເກີດຂຶ້ນຈາກແອນນາບັບຕິສຄຣິດສະຕຽນນອກຮີດ. ໄດ້ກໍ່ໃຫ້ເກີດເສື່ອມເສຍຊື່ສຽງໃຫ້ກັບແອນນາບັບຕິສ ແລະຄຣິດສະຕຽນເມັນໂນໄນ ຊຶ່ງຍັງສືບຕໍ່ມາອີກຈົນເຖິງປະຈຸບັນ.

ແອນນາບັບຕິສຍຸກທຳອິດມີຄວາມຜູກພັນກັບພຣະເຢຊູຢ່າງແໜ້ນແຟ້ນ ແລະມີການສະໜັບສະໜູນກັນຢ່າງຊື່ສັດ ພວກເຂົາດຳລົງຊີວິດຢ່າງຖ່ອມເຫມີສົນລະທັມຊຶ່ງແຕກຕ່າງຈາກໂລກທີ່ໂຫດຮ້າຍ. ຖ້າວ່າເຮົາສາມາດຖາມແອນນາບັບຕິສ ຄຣິດສະຕຽນໃນຍຸກແລກໄດ້ ພວກເຂົາຄົງຈະຕອບແບບດຽວກັນກັບລູກສິດຍຸກທຳອິດວ່າ *“ຊຸມຊົນຂອງພຣະເຢຊູເປັນຈຸດສູນກາງ ເປັນສູນກາງແຫ່ງຊີວິດຂອງພວກເຮົາ!”*

ໃນໂລກປະຈຸບັນຄຣິດສະຕຽນທີ່ມີມຸມມອງແບບແອນນາບັບຕິສ ເຂົ້າໃຈ ແລະດຳລົງຊີວິດທີ່ມີພຣະຄຣິດເປັນສູນກາງໃນຊີວິດຢ່າງແທ້ຈິງສະແດງອອກໃນ ໓ ດ້ານດັ່ງນີ້:

**໑. ການໃຫ້ອະໄພເປັນສິ່ງຈຳເປັນສຳຫລັບຊຸມຊົນຄຣິດສະຕຽນ.**

ພຣະເຢຊູມາເພື່ອໃຫ້ເຮົາມີຊີວິດ ແລະມີຊີວິດທີ່ຄົບບໍລິບູນຫລາຍຂຶ້ນ, ພຣະອົງອະທິຖານຢ່າງຮ້ອນຮົນເພື່ອເຮົາຈະເປັນອັນໜຶ່ງອັນດຽວກັນເໝືອນດັ່ງພຣະອົງຊົງເປັນອັນໜຶ່ງອັນດຽວກັບພຣະບິດາ. ສະມາຊິກຢູ່ໃນຊຸມຊົນມີຄວາມອົບອຸ່ນ ແລະໄດ້ຮັບຜົນປະໂຫຍດຫລາຍຢ່າງ. ເມື່ອ

ສະມາຊິກໃນພຣະກາຍຂອງພຣະຄຣິດນັ້ນໄດ້ອະໄພໃຫ້ກັນແລະກັນ.

ບັນຫາຂອງມະນຸດຊາດບໍ່ແມ່ນການຂາດແຄນເລື່ອງການເງິນ, ການສຶກສາຫລືອຳນາດ. ບັນຫາສຳຄັນຄື: ເຮົາໄດ້ເຮັດຜິດຕໍ່ກັນແລະກັນ ຕັ້ງແຕ່ເລີ້ມຕົ້ນຂອງສ່ວນບຸກຄົນ ແລະກຸ່ມ ໄດ້ເຮັດຜິດຕໍ່ພຣະເຈົ້າແລະຕໍ່ກັນທາງດ້ານທ່າທີ, ທັດສະນະຄະຕິແລະການປະພຶດ. ຜົນທີ່ໄດ້ຮັບກໍຄືຄວາມສຳພັນທີ່ແຕກຫັກກັບພຣະເຈົ້າ ແລະຕໍ່ກັນແລະກັນກັບຕົວຂອງເຮົາເອງ ແລະກັບທັງໂລກ.

ຈຸດປ່ຽນແປງທີ່ສຳຄັນໃນການແກ້ໄຂຄວາມຜິດພາດຍ່ອມຈະເກີດຂຶ້ນ ເມື່ອມີຝ່າຍໜຶ່ງກັບໃຈຢ່າງແທ້ຈິງ ແລະຂໍການໃຫ້ອະໄພ. ແຕ່ໜ້າເສຍດາຍທີ່ຢູ່ໃນໂລກຂອງຄົນທີ່ບໍ່ເປັນຄຣິດສະຕຽນ ການແກ້ໄຂຄວາມຂັດແຍ່ງຄືການເມີນເສີຍບໍ່ແມ່ນການໃຫ້ອະໄພ, ຫລາຍຄັ້ງມີການປະຕິເສດ ແລະການແກ້ຕົວປ້ອງກັນຕົວເອງມັກຈະມາແທນການສາລະພາບຄວາມຜິດບາບຢ່າງສັດຊື່. ການສາລະພາບບາບ ແລະການໃຫ້ອະໄພເປັນສິ່ງທີ່ທຳລາຍກຳແພງທີ່ຂວາງກັ້ນການສາມັກຄີທັມລະຫວ່າງເຮົາກັບພຣະເຈົ້າ ແລະຕໍ່ກັນແລະກັນ. ການໃຫ້ອະໄພເປັນສິ່ງທີ່ຂາດບໍ່ໄດ້ໃນການເສີມສ້າງ ແລະຟື້ນຟູໃນຊຸມຊົນຄຣິດສະຕຽນ!

**໒. ພຣະຄຳພີຈະຕ້ອງໄດ້ຮັບການຕີຄວາມໝາຍໃນຊຸມຊົນ**

ຄຣິດສະຕຽນຫລາຍຄົນໄດ້ສຶກສາພຣະຄຳຂອງພຣະເຈົ້າດ້ວຍຕົນເອງ ແລະປະກາດຄວາມເຂົ້າໃຈໃນສິ່ງທີ່ຕົນເອງເຂົ້າໃຈ. ເມື່ອເຂົາໄດ້ຈຳກັດເຂົາເອງໃນການຕີຄວາມໝາຍສ່ວນຕົວ ເຂົາມັກຈະສ້າງຄວາມສັບສົນແລະເຂົ້າໃຈຜິດຕໍ່ຄວາມໝາຍຂອງພຣະຄຳ.

ຄຣິດສະຕຽນຄົນອື່ນໆມອງເຫັນວ່າສິດຍາພິບານ, ນັກບວດ ຫລືຄູສອນພຣະຄຳເປັນກຸ່ມດຽວທີ່ສາມາດຕີຄວາມໝາຍພຣະຄຳຢ່າງຖືກຕ້ອງ. ເມື່ອເປັນແບບນີ້ສະມາຊິກທົ່ວໄປມັກລະເລີຍໃນການສຶກສາພຣະຄຳພີແລະນຳນຳໄປປະຕິບັດໃຊ້ໃນຊີວິດ.

ແອນນາບັບຕິສຄຣິດສະຕຽນມີມຸມມອງທີ່ເຊື່ອວ່າ ຄວນມີການສຶກສາພຣະຄຳພີສ່ວນຕົວ ແລະຢູ່ໃນຊຸມຊົນຄຣິດສະຕຽນທີ່ໄດ້ຮັບການຊົງນຳຂອງພຣະວິນຍານບໍລິສຸດ. ສະນັ້ນ, ຜູ້ທີ່ເຊື່ອຈະໄດ້ຮັບ ແລະໃຫ້ການອົບຮົມຕໍ່ກັນແລະກັນທົ່ວໄປ ໃນສະມາຊິກຊຸມຊົນຄຣິດສະຕຽນກຸ່ມຍ່ອຍ (Cell group). ໃນຫ້ອງຮຽນແລະໃນການປະຊຸມສຳມະນາ ໃນການນຳຂອງພຣະເຢຊູຊຶ່ງເປັນສູນກາງແຫ່ງຄວາມເຊື່ອຂອງພວກເຂົາ ພວກເຂົາຈະໄດ້ຮູ້ວ່າພຣະຄຳໄດ້ກ່າວຢ່າງໃດແດ່ໃນສະຖານະການຄັ້ງນັ້ນ.

**໓. ກຸ່ມຍ່ອຍ (ກຸ່ມແຊລ) ເປັນສ່ວນໜຶ່ງຂອງຊຸມຊົນຄຣິດສະຕຽນ**

ບາງຄັ້ງຄຣິສຕະຈັກຖືກເອີ້ນວ່ານົກມີສອງປີກ ປີກໜຶ່ງປຽບເໝືອນໂບດຊຶ່ງເນັ້ນເຖິງຄວາມສຳພັນລະຫວ່າງເຮົາກັບພຣະເຈົ້າຜູ້ບໍລິສຸດຢູ່ເໜືອພວກເຮົາ. (ຄວາມສຳພັນນີ້ເຮົາເອີ້ນວ່າຄວາມສຳພັນແນວຕັ້ງ) ອີກປີກໜຶ່ງຄື ກຸ່ມຍ່ອຍ (ກຸ່ມແຊລ) ປີກນີ້ແມ່ນເນັ້ນເຖິງຄວາມສາພັນແນວນອນ ຄຣິສຕະຈັກຕ້ອງການມີ ໒ ປີກນີ້.[16]

ການດຳເນີນຊີວິດຄຣິດສະຕຽນທີ່ເກີດຜົນຄື ມີຄວາມສຳພັນພາຍໃນກຸ່ມຂອງຈຳນວນ ໑໒ ຄົນ ນີ້ເປັນເລື່ອງຈິງ ເພາະພວກເຮົາຈະໄດ້ໃຫ້ແລະໄດ້ຮັບການປຶກສາ, ພວກເຮົາຈະຄົ້ນຫາຂອງປະທານແລະການຮ່ວມກັນເຮັດພາລະກິດການປະກາດຈະມີແຕ່ຄວາມຊື່ນຊົມຍິນດີ ແລະມີຄວາມສາມັກຄີທັມໃນກຸ່ມຍ່ອຍ. ຄຣິສຕະຈັກທີ່ເຂັ້ມແຂງຈະຕ້ອງເປັນຊຸມຊົນຄຣິດສະຕຽນທີ່ມີຄວາມຄິດສ້າງສັນທີ່ປະກອບດ້ວຍກຸ່ມຍ່ອຍ ບາງຄົນກ່າວວ່າກຸ່ມຍ່ອຍຄືພື້ນຖານຂອງຄຣິສຕະຈັກ.[17]

ສະຫລຸບແລ້ວ, ແອນນາບັບຕິສຄຣິດສະຕຽນມີມຸມມອງທີ່ມີ *ພຣະເຢຊູຄຣິດເປັນສູນກາງແຫ່ງຊີວິດໃນຊຸມຊົນນັ້ນ ຄືເປັນຫົວໃຈໃນຊີວິດພວກເຂົາ.* ພວກເຂົາຈະເຫັນວ່າ:

໑. ການໃຫ້ອະໄພເປັນສິ່ງທີ່ຂາດບໍ່ໄດ້ໃນຊຸມຊົນ.

໒. ການສົນທະນາສຶກສາຮຽນຮູ້ດ້ວຍກັນເປັນສິ່ງຈຳເປັນກ່ອນທີ່ຈະຕີຄວາມໝາຍພຣະຄຳພີ.

໓. ກຸ່ມຍ່ອຍ (ກຸ່ມແຊລ) ເປັນສູນກາງຊີວິດຂອງຄຣິສຕະຈັກ.

ເຊື່ອໃນພຣະເຢຊູຄຣິດເຂົ້າຮ່ວມເປັນສ່ວນໜຶ່ງຂອງຄຣິສຕະຈັກ ແລະດຳເນີນຊີວິດໃໝ່ສິ່ງເຫລົ່ານີ້ຄືຄວາມຈິງໃນຊຸມຊົນຄຣິດສະຕຽນ.[18]

**ທ່ານໄດ້ເປັນຄຣິດສະຕຽນແບບແອນນາບັບຕິສນີ້ບໍ່?**

**ຫລັກຂໍ້ເຊື່ອທີ ໓ ການເຮັດໃຫ້ຄືນດີກັນເປັນສູນກາງວຽກງານຕົ້ນຕໍຂອງພວກເຮົາ.**

ພຣະເຈົ້າໄດ້ສົ່ງພຣະບຸດຄືພຣະເຢຊູຄຣິດເຂົ້າມາກຳຈັດຄວາມບາບອອກໄປ ພຣະເຢຊູກາຍເປັນຜູ້ທີ່ນຳພາຂອງຄົນທີ່ປາກຄືນດີກັບພຣະເຈົ້າ ແລະຄືນດີຕໍ່ກັນແລະກັນ ພຣະອົງສາມາດແກ້ໄຂສິ່ງທີ່ແຈກສະຫລາຍ ແລະບໍ່ຍຸດຕິທັມ, ພຣະອົງຍັງຝຶກໃຫ້ຜູ້ທີ່ຕິດຕາມພຣະອົງໃຫ້ເປັນທູດແຫ່ງການຄືນດີກັນ.

ພຣະເຢຊູໄດ້ຊີ້ນຳ ທາງຂອງການຄືນດີກັນຢ່າງຊັດເຈນໃນຊຸມຊົນແຫ່ງຄວາມເຊື່ອຊຶ່ງບັນທຶກໄວ້ໃນພຣະທັມມັດທາຍ ໑໘:໑໕-໔໐ ຄົນຫລືກຸ່ມທີ່ໄດ້ຂັດແຍ່ງກັນບໍ່ວ່າຈະກ່ຽວຂ້ອງທາງດ້ານເສດຖະກິດ, ສັງຄົມຫລືເຫດຜົນສ່ວນຕົວຄວນຈະໄປແກ້ໄຂບັນຫາ ໜຶ່ງຕໍ່ໜຶ່ງກ່ອນ. ແຕ່ຖ້າມີສິ່ງໃດບໍ່ຍຸດຕິທັມ ຫລືຄວາມຂັດແຍ່ງທີ່ແກ້ໄຂບໍ່ໄດ້ເຮົາກໍຈະມີຂັ້ນຕອນຕໍ່ໄປ.

ຄຳເທດສະໜາບົນພູເຂົາ ພຣະເຢຊູໄດ້ຊົງສອນລູກສິດຂອງພຣະອົງກ່ຽວກັບເລື່ອງສັນຕິ ແລະຄວາມຍຸຕິທັມຈະເກີດຂຶ້ນໄດ້ກໍຕ້ອງມີການສະແຫວງຫາລາດຊະອານາຈັກສະຫວັນກ່ອນ, ພ້ອມກັບສາລະພາບຄວາມຜິດບາບ. ປາດຖະໜາຢາກໃຫ້ຜູ້ໃດເຮັດສິ່ງໃດກັບເຮົາ ເຮົາຄວນເຮັດສິ່ງນັ້ນຕໍ່ເຂົາກ່ອນ, "ຢ່າຮັກສະເພາະຜູ້ທີ່ຮັກເຮົາ" ພຣະເຢຊູຊົງກ່າວວ່າ "ເຖິງແມ່ນຜູ້ທີ່ບໍ່ເຊື່ອກໍຮັກເຂົາເໝືອນກັນ ຈົ່ງຮັກສັດຕູຂອງທ່ານ ແລະອະທິຖານເພື່ອຜູ້ທີ່ຂົ່ມເຫັງທ່ານ" ມັດທາຍ ໕:໔໓-໔໘. ນີ້ຄືຄວາມໝາຍຂອງພຣະເຢຊູ ແລະຄວາມໝາຍນີ້ພຣະອົງໄດ້ເຮັດກັບເຮົາກ່ອນ. ການທີ່ເຮົາຕິດຕາມພຣະເຢຊູນັ້ນ ໝາຍຄວາມວ່າເຮົາຈະຕ້ອງດຳເນີນໃນຮູບແບບຊີວິດໃໝ່.

ໃນຊ່ວງສຸດທ້າຍຂອງພາລະກິດ ພຣະເຢຊູຊົງກ່າວວ່າ "ພຣະບິດາໄດ້ຊົງໃຊ້ເຮົາມາຢ່າງໃດ, ເຮົາກໍໃຊ້ພວກທ່ານໄປຢ່າງນັ້ນ" (ໂຢຮັນ ໒໐:໒໑) "ເຫດສັນນັ້ນທ່ານທັງຫລາຍຈົ່ງອອກໄປສັ່ງສອນຄົນທຸກຊາດໃຫ້ເປັນລູກສິດຂອງເຮົາ ແລະໃຫ້ບັບຕິສະມາເຂົາ, ສັ່ງສອນເຂົາໃຫ້ຖືຮັກສາ ສາລະພັດຊຶ່ງເຮົາໄດ້ສັ່ງພວກເຈົ້າໄວ້ (ມັດທາຍ ໒໘:໑໘-໒໐). ເພາະເຫດນີ້, ລູກສິດຂອງພຣະອົງຈຶ່ງອອກໄປທົ່ວໂລກ ເທດສະໜາສັ່ງສອນ ແລະສະແດງຊີວິດໃໝ່ເພື່ອທຸກຄົນຈະສາມາດຄືນດີກັບພຣະເຈົ້າໄດ້ ແລະຄືນດີຕໍ່ກັນແລະກັນ.

ເລື່ອງທ້າທາຍທີ່ຍິ່ງໃຫຍ່ທີ່ສຸດຂອງຄຣິດສະຕຽນຍຸກທຳອິດທີ່ປະສົບບັນຫາຄື ການຂັດແຍ່ງລະຫວ່າງເຊື້ອສາຍ, ສາດສະໜາ ແລະວັດທະນະທຳລະຫວ່າງຄົນຢິວ ແລະຄົນຕ່າງຊາດ. ຫລັງຈາກທີ່ມີຄົນຫລວງຫລາຍເຂົ້າມາຢູ່ໃນຄອບຄົວຂອງພຣະເຈົ້າຫລາຍຮູບແບບພວກລູກສິດຕົກລົງກັນວ່າ ຜູ້ທີ່ມີເບື້ອງຫລັງແຕກຕ່າງກັນສາມາດເປັນກາຍດຽວກັນຢູ່ດ້ວຍກັນຢ່າງມີສັນຕິສຸກ ເພາະມີຄວາມເຊື່ອໃນພຣະເຢຊູອົງດຽວກັນ ບໍ່ແມ່ນທາງກົດໝາຍ ຫລືພິທີອື່ນໆ.

ເປັນເວລາຫລາຍຮ້ອຍປີທີ່ຜູ້ຕິດຕາມພຣະເຢຊູ ໄດ້ປະຕິເສດການສູ້ຮົບທາງທະຫານ ພວກເຂົາເຂົ້າໃຈວ່າຕົນເອງໄດ້ຢູ່ໃຕ້ຄຳສັ່ງໃຫ້ຮັກສັດຕູບໍ່ແມ່ນໄປຂ້າເຂົາ "ທັງໝົດນີ້ແມ່ນເກີດມາຈາກພຣະເຈົ້າຜູ້ຊົງເຮັດໃຫ້ຄືນດີກັບພຣະອົງ ໂດຍຜ່ານທາງພຣະເຢຊູຄຣິດ ແລະຊົງໂຜດປະທານໃຫ້ເຮົາມີພາລະກິດແຫ່ງການຄືນດີກັນ" (໒ ໂກຣິນໂທ ໕:໑໘). ຖ້າທ່ານໄດ້ຖາມຄຣິດສະຕຽນຍຸກທຳອິດນັ້ນ ຂ້າພະເຈົ້າເຊື່ອວ່າພວກເຂົາຄົງຈະຕອບທ່ານວ່າ *"ການເຮັດໃຫ້ຄົນຄືນດີກັບພຣະເຈົ້າ ແລະຄືນດີຕໍ່ກັນແລະກັນແມ່ນວຽກງານຕົ້ນຕໍຂອງພວກເຮົາ".*

ເມື່ອກະສັດ **ຄອນສະແຕນຕິນ** ໄດ້ຢຶດເອົາສາດສະໜາຄຣິດ ມາເປັນສາດສະໜາປະຈຳຊາດ ຄຣິສຕະຈັກມີການປ່ຽນແປງໄປຢ່າງມາກມາຍ ພຣະເຢຊູໄດ້ກ່າວວ່າ "ລາດຊະອານາຈັກຂອງເຮົາບໍ່ເໝືອນກັບໂລກນີ້" ແຕ່ກະສັດຄອນສະແຕນຕິນປົກຄອງປະເທດເມື່ອເວລາຜ່ານໄປເຮົາໄດ້ເຫັນຄວາມແຕກຕ່າງເກີດຂຶ້ນລະຫວ່າງລາດຊະອານາຈັກທີ່ປົກຄອງດ້ວຍພຣະເຢຊູ ແລະລາດຊະອານາຈັກທີ່ປົກຄອງດ້ວຍກະສັດ. ຄວາມເຊື່ອຂອງຄຣິດສະຕຽນຍຸກທຳອິດໄດ້ຖືກດັດແປງ ເຮົາໄດ້ພົບເຫັນວ່າມີບາງຄົນກາຍເປັນຄົນລວຍໃນຄຣິສຕະຈັກ ບາງຄົນກາຍເປັນຄົນຍາກຈົນ ຄຣິດສະຕຽນກາຍເປັນຜູ້ຂົ່ມເຫັງຄົນອື່ນ ຄຣິດສະຕຽນທີ່ເຄີຍຮັກສັນຕິສຸກໄດ້ກັບເຂົ້າສູ່ສົງຄາມ ແທນທີ່ຈະໃຊ້ກຳລັງເຫື່ອແຮງເຮັດການປະກາດເລື່ອງສັນຕິສຸກ ແລະທາພາລະກິດຂອງພຣະເຈົ້າ ເຂົາໄດ້ທຸ້ມເທກາລັງທຶນອັນມະຫາສານໄປກໍ່ສ້າງໂບດໃຫຍ່ຢູ່ທົ່ວທຸກແຂວງໃນເຂດຢູໂຣບ. ການກໍ່ສ້າງຕຶກອາຄານຫລູຫລາເຫລົ່ານີ້ກາຍມາເປັນວຽກງານຕົ້ນຕໍຂອງພວກເຂົາ.

ນັກບວດ ອໍກັດສະຕິນ ໄດ້ສົນໃຈໃນເລື່ອງສິນທັມສ່ວນຕົວເຊັ່ນ ການເມົາສຸລາ, ຄວາມລາມົກ ການພະນັນແລະການລ່ວງປະເພນີ ແຕ່ການສອນກ່ຽວກັບການສ້າງສັນຕິສຸກ ແລະຄວາມຍຸຕິທັມນັ້ນໄດ້ຖືກຈຳກັດສະເພາະແຕ່ຢູ່ໃນຄຣິສຕະຈັກທີ່ມີການພົວພັນກັບຈັກກະພັດ, ແທນທີ່ຈະສະແຫວງຫາການຄືນດີກັບສັດຕູ, ນັກບວດ ອໍກັດສະຕິນເຂົ້າໃຈວ່າຄວາມເຊື່ອຂອງຄຣິດສະຕຽນ ຄວນປ້ອງກັນຜູ້ເຊື່ອໃນພຣະເຈົ້າ. ເຂົາໄດ້ຂຽນເຖິງ "ສົງຄາມແຫ່ງຄວາມຊອບທັມ" ຊຶ່ງອະນຸຍາດໃຫ້ຄຣິດສະຕຽນໃນບາງສະຖານະການສາມາດເຂົ້າຮ່ວມຄວາມຮຸນແຮງ ແລະເຮັດສົງຄາມ ແລະຍັງມີຄຣິດສະຕຽນຫລາຍກຸ່ມຫລືຫລາຍຄະນະຍັງຍຶດຖືຈຸດຢືນແບບນີ້ຕໍ່ສົງຄາມ.

**ລູເທີ** (Luther), **ສະວິ່ງລີ** (Zwingli) **ແລະເຄວິນ** (Calvin) ໄດ້ເຮັດຫລາຍຢ່າງທີ່ດີ. ລູເທີ ໄດ້ພັດທະນາແນວຄິດທີ່ເອີ້ນວ່າ "ກອງທຶນຊຸມຊົນ" ເຄວິນ ໄດ້ກ່າວເຖິງການດຳເນີນຊີວິດຕາມຫລັກຄຣິດສະຕຽນສາມາດເຮັດໃຫ້ເຮົາມີອິດທິພົນຕໍ່ສັງຄົມ. ແຕ່ເໝືອນກັນກັບ

ອໍກັດສະຕິນ ພວກເຂົາເນັ້ນການໃຫ້ອະໄພບາບເປັນເລື່ອງສ່ວນຕົວ ແລະການເຊື່ອຟັງພຣະບັນຍັດສິບປະການ. ແຕ່ພວກເຂົາບໍ່ມີການສອນ ແລະການປະຕິບັດທີ່ຊັດເຈນ ເຖິງພຣະຄຸນທີ່ເຮັດໃຫ້ເຮົາປ່ຽນແປງກ່ຽວກັບການປະກາດ ແລະການສ້າງສັນຕິ.

ແອນນາບັບຕິສຄຣິດສະຕຽນຍຸກທຳອິດຊຶ່ງນຳພາໂດຍ **ເມັນໂນ ໄຊມອນ** (Menno Simons) ແລະຜູ້ນຳຄົນອື່ນໆ ມີຄວາມເຂົ້າໃຈທີ່ຕ່າງກັນກ່ຽວກັບການເປັນພຣະກາຍຂອງພຣະຄຣິດທີ່ດຳລົງຊີວິດຢູ່ໃນໂລກນີ້. ພວກເຂົາເຊື່ອວ່າເພາະການທຳງານຂອງພຣະວິນຍານບໍລິສຸດ ແລະຄຳໝັ້ນສັນຍາທີ່ມີຕໍ່ຊຶ່ງກັນແລະກັນ. ຜູ້ຕິດຕາມພຣະເຢຊູສາມາດເປັນເໝືອນພຣະອົງ ແລະດຳເນີນຊີວິດໃນແນວທາງທີ່ເໝືອນພຣະຄຣິດໄດ້.

ແອນນາບັບຕິສຄຣິດສະຕຽນຍຸກທຳອິດຈະມັກປະຊຸມກັນຕາມບ້ານ ແລະເປັນກຸ່ມຍ່ອຍ ເຂົາໄດ້ສຳຜັດກັບການຊົງສະຖິດຂອງພຣະວິນຍານບໍລິສຸດຢູ່ທ່າມກາງພວກເຂົາ ແລະໄດ້ສຶກສາພຣະຄຳ ໃຫ້ການໜູນໃຈຕໍ່ກັນແລະກັນກ່ຽວກັບການດຳເນີນຊີວິດ. ຄຣິດສະຕຽນແອນນາບັບຕິສຕ້ອງການໃຫ້ພຣະຄຳເປັນ "ອາວຸດ" ຂອງເຂົາເທົ່ານັ້ນ. ໃນການສຶກສາພຣະຄຳຂອງພຣະເຈົ້າພວກເຂົາໄດ້ເນັ້ນການຮູ້ຈັກໃຊ້ເງິນ ແລະວັດຖຸ, ເນັ້ນເລື່ອງການມີສັນຕິສຸກກັບພຣະເຈົ້າ, ເນັ້ນເລື່ອງການມີສັນຕິສຸກຕໍ່ກັນແລະກັນ ແລະການສ້າງສັນຕິສຸກກັບສັດຕູ.

ການເຄື່ອນໄຫວຂອງແອນນາບັບຕິສຄຣິດສະຕຽນຄ້າຍກັນກັບການເຄື່ອນໄຫວຂອງ ເຄຣິສະມາຕິກ ຫລືເປັນການເຄື່ອນໄຫວຂອງພຣະວິນຍານບໍລິສຸດໃນສະໄໝສັດຕະວັດທີ ໑໖ ຜູ້ນຳແອນນາບັບຕິສກ່າວເຖິງພຣະວິນຍານບໍລິສຸດຫລາຍກວ່ານັກປະຕິຮູບອື່ນໆ.[19] ພວກເຂົາເຊື່ອວ່າພຣະວິນຍານບໍລິສຸດຊົງເປັນຜູ້ປະທານລິດອຳນາດໃຫ້ແກ່ພວກເຂົາໃນການເປັນລູກສິດຂອງພຣະອົງ. ການປະກາດ, ການສ້າງສັນຕິສຸກ ແລະການດຳເນີນຊີວິດແບບລຽບງ່າຍທຳມະດາ.

ການເຄື່ອນໄຫວຂອງແອນນາບັບຕິສ ເປັນການເຄື່ອນໄຫວຂອງການປະກາດ ໃນສັດຕະວັດທີ ໑໖ ດ້ວຍຫົວໃຈທີ່ຍຶດໝັ້ນ ແລະຮ້ອນຮົນ. ຜູ້ນຳແອນນາບັບຕິສສຳຄັນຫລາຍຄົນໄດ້ສ່ຽງຊີວິດຂອງເຂົາເດີນທາງໄປທົ່ວທະວີບຢູໂຣບ ເຂົາໄດ້ພະຍາຍາມເຮັດໃຫ້ມະນຸດຄືນດີກັບພຣະເຈົ້າ ແລະຄືນດີຕໍ່ກັນແລະກັນ.[20] ມີຫລາຍພັນຄົນໄດ້ເຂົ້າມາຮູ້ຈັກກັບພຣະເຢຊູຄຣິດ ແລະເຂົ້າຮ່ວມກຸ່ມສາມັກຄີທຳຂອງແອນນາບັບຕິສ. ກຸ່ມສາສັກຄີທັມທີ່ກ່າວມານີ້ໄດ້ເກີດຂຶ້ນທຸກແຫ່ງໃນທະວີບຢູໂຣບ.

ບໍ່ພຽງແຕ່ເທົ່ານັ້ນ, ການເຄື່ອນໄຫວຂອງແອນນາບັບຕິສຍັງເປັນການເຄື່ອນໄຫວເພື່ອຄວາມຍຸດຕິທຳຂອງສັງຄົມ. ເຊັ່ນດຽວກັນມີຫລາຍກຸ່ມຢູ່ໃນການເຄື່ອນໄຫວນີ້ໄດ້ຮ່ວມແບ່ງປັນຊັບສິນໃຫ້ກັນແລະກັນ ແລະເຂົາຍັງເນັ້ນໃຫ້ມີຄວາມຍຸດຕິທຳຕໍ່ຄົນອື່ນ. ຜູ້ນຳແອນນາບັບຕິສ ແລະຜູ້ຕິດຕາມເຂົາໄດ້ແກ້ບັນຫາທາງດ້ານເສດຖະກິດ ແລະສັງຄົມຂອງຊາວນາຊຶ່ງເປັນກຸ່ມກຳລັງປະຕິວັດຕໍ່ລະບົບເຈົ້າຂຸນມູນນາຍ ກຸ່ມຍ່ອຍໄດ້ກາຍເປັນສັງຄົມທີ່ແຕກຕ່າງກັບລະບົບການປົກຄອງຂອງຈັກກະພັດ ແລະລະບົບເຈົ້າຂຸນມູນນາຍ. ມັນເປັນໄປບໍ່ໄດ້ທີ່ຜູ້ທີ່ຕິດຕາມພຣະເຢຊູຢ່າງແທ້ຈິງຮັບການປ່ຽນແປງໂດຍພຣະວິນຍານບໍລິສຸດຂອງພຣະເຈົ້າ ແລະຮັບບັບຕິສະມາເຂົ້າໃນພຣະກາຍຂອງພຣະເຢຊູນັ້ນ ຍັງຕິດຢູ່ກັບວັດຖຸສິ່ງຂອງ ແລະຊັບສິນມາກມາຍເມື່ອເຂົາເຫັນພີ່ນ້ອງສະມາຊິກຍັງມີຄວາມຂັດສົນຢູ່.[21]

ຜ່ານການສຶກສາພຣະຄຳ ແລະຄວາມເຊື່ອໝັ້ນຄົງໃນການຕິດຕາມພຣະເຢຊູຄຣິດໃນຊີວິດປະຈຳວັນ ຄຣິດສະຕຽນແອນນາບັບຕິສເຊື່ອວ່າການມີສ່ວນຮ່ວມໃນເລື່ອງສົງຄາມເປັນເລື່ອງທີ່ຜິດ ເໝືອນກັບລູກສິດຍຸກທຳອິດທີ່ໄດ້ປະຕິເສດໃນການເຂົ້າຮ່ວມເປັນທະຫານ ເຖິງແມ່ນ ຊາວເທີນມູສະລິມຈະບຸກລຸກເຂດທະວີບຢູໂຣບແທນທີ່ຈະຕໍ່ສູ້ກັບສັດຕູຂອງເຂົາ, ຄຣິດສະຕຽນແອນນາບັບຕິສໄດ້ເຮັດຕາມແບບຢ່າງພຣະເຢຊູຄຣິດ "ເມື່ອເຂົາກ່າວຫຍາບຊ້າຕໍ່ພຣະເຢຊູ ພຣະອົງບໍ່ໄດ້ກ່າວໂຕ້ຕອບເຂົາດ້ວຍຄຳຫຍາບຊ້າເລີຍ. ເມື່ອພຣະອົງຊົງທົນທຸກທໍລະມານ ພຣະອົງບໍ່ໄດ້ຊົງຂູ່ເຂັນ..." (໑ ເປໂຕ ໒:໒໓)

ຖ້າເຮົາສາມາດຖາມພວກເຂົາໄດ້ ຂ້າພະເຈົ້າເຊື່ອວ່າ ທ່ານ ເມັນໂນໄຊມອນ (Menno Simons) ແລະສ່ວນໃຫຍ່ຂອງຄຣິດສະຕຽນແອນນາບັບຕິສຍຸກແລກ ພ້ອມກັບລູກສິດຍຸກແລກຄົງຈະເວົ້າວ່າ "ການເຮັດໃຫ້ມະນຸດຄືນດີກັບພຣະເຈົ້າ ແລະຄືນດີຕໍ່ກັນແລະກັນເປັນວຽກງານຕົ້ນຕໍຂອງພວກເຮົາ"

ມັນມີຄວາມໝາຍຢ່າງໃດໃນປະຈຸບັນ? ຄຣິດສະຕຽນທີ່ມີມຸມມອງແບບແອນນາບັບຕິສເຊື່ອວ່າ:

**໑. ເຮົາຈະຊ່ວຍເຫລືອຄົນໃຫ້ຄືນດີກັບພຣະເຈົ້າ.**

ເໝືອນກັບພຣະເຈົ້າເປັນຜູ້ເລີ້ມຕົ້ນສົ່ງພຣະເຢຊູຄຣິດມາຊ່ວຍເຮົາໃຫ້ຄືນດີກັບພຣະອົງ ແລະຄືນດີຕໍ່ກັນແລະກັນ. ພຣະເຈົ້າໄດ້ບອກໃຫ້ເຮົາທຳໜ້າທີ່ຂອງເຮົາໃນການນຳຄົນອື່ນເຂົ້າມາຫາພຣະອົງ. ພວກເຮົາຈະທຳພາລະກິດນີ້ໃນກຸງເຢລູຊາເລັມ, ຢູດາ, ຊະມາເລຍແລະທົ່ວໂລກ. *ພຣະເຈົ້າໄດ້ມອບພາລະກິດ ການໃຫ້ຄືນດີກັນເປັນວຽກງານຂອງພວກເຮົາ!*

ໃນປະຈຸບັນຄຣິດສະຕຽນທີ່ມີມຸມມອງແບບແອນນາບັບຕິສ ໄດ້ຖືກມອບໝາຍໜ້າທີ່ໃຫ້ອອກໄປສ້າງລູກສິດ, ໃຫ້ເຂົາຮັບບັບຕິສະມາ ແລະສອນເຂົາທຸກຢ່າງກ່ຽວກັບຊີວິດ ແລະຄຳສອນຂອງພຣະເຢຊູຕ້ອງເຂົ້າຮ່ວມກັບຊຸມຊົນທີ່ມີພຣະເຢຊູເປັນສູນກາງຂອງຄວາມເຊື່ອ ແລະປະຕິບັດຕົນໃຫ້ມີຊີວິດທີ່ມີການປ່ຽນແປງ.

ຜູ້ທີ່ສະແຫວງຫາ "ໄດ້ສະຫລະຊີວິດຂອງເຂົາເອງໃຫກັບພຣະຄຣິດໃຫ້ຫລາຍທີ່ສຸດທີ່ເຂົາຈະເຮັດໄດ້" ເຂົາໄດ້ບັງເກີດໃໝ່ແລ້ວ.[22] ເຂົາໄດ້ມີຊີວິດທີ່ເລີ້ມຕົ້ນໃໝ່ ເຂົາໄດ້ມີຄ່ານິຍົມໃໝ່ ແລະພຣະວິນຍານບໍລິສຸດໄດ້ເຈີມເຂົາໃຫ້ມີພະລັງໃນການດຳລົງຊີວິດທີ່ມີຄ່ານິຍົມໃໝ່.

ການຄືນດີກັບພຣະເຈົ້າໄດ້ນຳໃຫ້ເຮົາມີຊີວິດທີ່ມີການປ່ຽນແປງ ພຣະເຢຊູໄດ້ປ່ຽນຄວາມຄິດຄວາມສຳພັນ ແລະການປະພຶດຂອງຄົນທີ່ຍອມຮັບພຣະອົງ ເຂົາໄດ້ຮັບການປ່ຽນແປງທາງດ້ານຄວາມຄິດ, ຄວາມຮູ້ສຶກ, ທ່າທີທາງສັງຄົມ ແລະການເມືອງຊຶ່ງມີຄວາມແຕກຕ່າງຢ່າງຊັດເຈນກັບຄົນໃນໂລກນີ້.

## ໔. ພວກເຮົາຈະຊ່ວຍເຫລືອຄົນໃຫ້ຄືນດີຕໍ່ກັນແລະກັນ.

ພວກເຮົາບໍ່ພຽງແຕ່ນຳຄົນໃຫ້ຄືນດີກັບພຣະເຈົ້າ ແຕ່ຊ່ວຍຄົນໃຫ້ຄືນດີຕໍ່ກັນແລະກັນມັນເປັນວຽກງານຂອງພວກເຮົາ. ດ້ວຍເຫດນີ້ພວກເຮົາຈະຫາສາເຫດຂອງຄວາມຂັດແຍ່ງ ແລະຊ່ວຍເຫລືອຄົນແລະກຸ່ມທີ່ຂັດແຍ່ງກັນໃຫ້ຄືນດີກັນ ດ້ວຍການຕັ້ງໃຈຟັງສາລະພາບຄວາມຜິດບາບຢ່າງສັດຊື່ ຍົກໂທດໃຫ້ກັນແລະກັນຢ່າງແທ້ຈິງ ແລະການເຮັດໃຫ້ຄືນສູ່ສະພາບເດີມ.

ການອະໄພໂທດສາມາດກຳຈັດກຳແພງແຫ່ງຄວາມພິດບາບ ລະຫວ່າງເຮົາກັບພຣະເຈົ້າແລະລະຫວ່າງເຮົາກັບຄົນອື່ນໆ ໃນຄຣິສຕະຈັກໄດ້ມີການຮັບສິນມະຫາສະນິດໂດຍການລະນຶກເຖິງການອະໄພໂທດທີ່ມາຈາກພຣະເຈົ້າ ແລະມາຈາກຄົນອື່ນນັ້ນເຮັດໃຫ້ເຮົາມີຄວາມສາມັກຄີທັມໄດ້.

ຄຣິດສະຕຽນຄວນເປັນທໍ່ພຣະພອນໃຫ້ກັບຄົນເບື້ອງຫລັງທີ່ແຕກຕ່າງກັນທາງດ້ານເພດໄວ ແລະຄວາມເຊື່ອທີ່ແຕກຕ່າງກັນ ພວກເຮົາບໍ່ສາມາດຊ່ວຍຄົນອື່ນໄດ້ນອກຈາກທີ່ເຮົາມີປະສົບການມາແລ້ວ ພວກເຮົາຢາກຈະຊ່ວຍຄົນໃຫ້ຄືນດີກັນ ພວກເຮົາຈຳເປັນຕ້ອງຮຽນຮູ້ເພີ້ມເຖິງການຄືນດີກັນແລະພວກເຮົາຈຳເປັນຕ້ອງມີການປ່ຽນແປງອີກດ້ວຍ.

## ໕. ພວກເຮົາຈະເປັນທູດແຫ່ງການສ້າງການຄືນດີກັນຢູ່ໃນໂລກນີ້.

ມີຄຣິດສະຕຽນບາງກຸ່ມເຊື່ອວ່າການປະກາດຂ່າວປະເສີດເປັນງານຕົ້ນຕໍຂອງພວກເຂົາ ບາງກຸ່ມກໍເນັ້ນເຖິງການສ້າງສັນຕິເປັນງານຕົ້ນຕໍຂອງເຂົາ. ແຕ່ສິ່ງທີ່ດີທີ່ສຸດກໍຄື "ການຄືນດີກັນເປັນງານຫລັກຂອງພວກເຮົາ" ພາລະກິດການປະກາດ ແລະການສ້າງສັນຕິສາມາດຮ່ວມກັນເປັນອັນໜຶ່ງອັນດຽວກັນໄດ້ ເປັນຂໍ້ຄິດທີ່ເອີ້ນວ່າ "ການຄືນດີກັນ" ຈຸດປະສົງຂອງພຣະເຈົ້າຄື "ໂດຍພຣະອົງ (ພຣະເຢຊູຄຣິດ) ໃຫ້ທຸກສິ່ງຄືນດີກັບພຣະເຈົ້າ" ໂກໂລຊາຍ ໑:໒໐.

ແອນນາບັບຕິສຄຣິດສະຕຽນມອງເຫັນວ່າ ຄວາມລອດຄືການປ່ຽນແປງໃນຊີວິດ ດ້ວຍເຫດນີ້, ເຂົາຈຶ່ງປະຕິເສດການເຂົ້າຮ່ວມເຮັດສົງຄາມ ເພາະສົງຄາມປະຈຸບັນໄດ້ສອນໃຫ້ທະຫານເວົ້າຕົວະໃຫ້ກຽດຊັງກັນ ແລະທຳຮ້າຍຄົນອື່ນ ຄົນທີ່ໄດ້ຮັບການປ່ຽນແປງຊີວິດນີ້ບໍ່ສາມາດເຮັດສິ່ງເຫລົ່ານີ້ໄດ້.

ການສ້າງສັນຕິມີຄວາມແຕກຕ່າງກັບເຮັດໃຫ້ສະຫງົບ ຜູ້ທີ່ຕິດຕາມພຣະເຢຊູທີ່ໄດ້ຮັບການປ່ຽນແປງໃນຊີວິດ ພວກເຮົາຈະຕ້ອງ "ຕໍ່ສູ້" ກັບຄວາມຊົ່ວຮ້າຍກັບຄວາມທີ່ບໍ່ຍຸດຕິທັມຢ່າງເຂັ້ມງວດຫລາຍກວ່າຄົນອື່ນໆ. ແຕ່ການຕໍ່ສູ້ຂອງພວກເຮົາມີຄວາມແຕກຕ່າງຈາກຄົນອື່ນ, ເຮົາໄດ້ຖືກທ້າທາຍໃຫ້ກ່າວເໝືອນກັບອັກຄະສາວົກໂປໂລວ່າ "ເຖິງແມ່ນວ່າເຮົາຢູ່ກັບໃນໂລກນີ້ກໍຈິງ ເຮົາກໍບໍ່ໄດ້ສູ້ຮົບຕາມທຳມະດາຂອງມະນຸດເພາະວ່າເຄື່ອງອາວຸດຂອງເຮົາບໍ່ເປັນຝ່າຍໂລກ..." (໒ ໂກຣິນໂທ ໑໐:໓-໔)

ປະຫວັດສາດໄດ້ສອນໃຫ້ເຮົາຮູ້ວ່າ ຄວາມຮຸນແຮງມັກນຳໄປສູ່ການສ້າງຄວາມຮຸນແຮງເພີ້ມຂຶ້ນຫລາຍກວ່າເກົ່າ ຄວາມຮຸນແຮງຈະຈົບລົງດ້ວຍການບໍ່ໃຊ້ຄວາມຮຸນແຮງເທົ່ານັ້ນ ແລະນຳໄປສູ່ການເກີດຄວາມຍຸດຕິທັມ ບໍ່ວ່າຈະຢູ່ໃນສະຖານະການໃດໆ. ພວກເຮົາຄວນທີ່ຈະຮຽນແບບພຣະເຢຊູ ຊຶ່ງເປັນສູນກາງຂອງຄວາມເຊື່ອ. ພຣະເຢຊູໃຊ້ຄຳເວົ້າ, ການຫ່ວງໃຍດູແລ, ແລະວິທີ ທີ່ບໍ່ໃຊ້ຄວາມຮຸນແຮງໃນການແກ້ໄຂຄວາມຂັດແຍ່ງ ແລະນຳຄົນເຂົ້າມາໃນຄອບຄົວຂອງພຣະເຈົ້າ. ພຣະອົງບໍ່ໄດ້ໃຊ້ປືນ ຫລືລູກລະເບີດ. ທ່າທີຂອງພວກເຮົາຄື "ທ່ານຕ້ອງມີນ້ຳໃຈຕໍ່ກັນຕໍ່ກັນແລະກັນເໝືອນຢ່າງພຣະເຢຊູຄຣິດ" (ຟີລິບປອຍ ໒:໕)

ການເຮັດໃຫ້ຄືນດີກັນເປັນວຽກງານທີ່ໜັກແລະລຳບາກ ເຮົາຈະຕ້ອງຍິນດີທີ່ຈະສະລະອຸທິດຊີວິດຂອງເຮົາ ເພື່ອຄົນທີ່ຢູ່ໃນໂລກນີ້ຈະໄດ້ຄືນດີກັບພຣະເຈົ້າ ຄືນດີຕໍ່ກັນແລະກັນ ແລະຄືນດີຕໍ່ສັດຕູ ພາລະກິດນີ້ຈະເຮັດໃຫ້ເຮົາຊື່ນຊົມຍິນດີຢ່າງຫລວງຫລາຍ. ພວກເຮົາຈະໄດ້ດຳລົງຊີວິດທີ່ໄດ້ມີການຄືນດີ ແລະນຳຄົນໃຫ້ຄືນດີກັນ ມີຄວາມສຳພັນກັບພຣະເຈົ້າແລະຕໍ່ກັນແລະກັນ.

ສະຫລຸບແລ້ວ, ຄຣິດສະຕຽນທີ່ມີມຸມມອງໃນຮູບແບບແອນນາບັບຕິສເຊື່ອວ່າເຂົາໄດ້ຖືກເອີ້ນໃຫ້ໄປ:

໑. ຊ່ວຍຄົນໃຫ້ຄືນດີກັບພຣະເຈົ້າ.

໒. ຊ່ວຍຄົນອື່ນໃຫ້ຄືນດີຕໍ່ກັນແລະກັນ.

໓. ຮັບໃຊ້ເປັນທູດຂອງພຣະເຈົ້າ ສົ່ງເສີມໃຫ້ມີການຄືນດີກັນຢູ່ໃນໂລກນີ້.

*ການເຮັດໃຫ້ຄືນດີກັນເປັນງານຕົ້ນຕໍຂອງຄຣິດສະຕຽນແອນນາບັບຕິສ.* ທ່ານເປັນຄຣິດສະຕຽນແບບແອນນາບັບຕິສນີ້ຫລືບໍ່?

**ປິດສະຫລຸບ**

ເຮົາຄິດຢ່າງໃດກັບຄວາມເຂົ້າໃຈຂອງແອນນາບັບຕິສທີ່ກ່ຽວກັບຄວາມເຊື່ອຂອງຄຣິດສະຕຽນ? ເຮົາໄດ້ຮັບບົດຮຽນຫຍັງແດ່? ສາດສະໜາຈານ ຣູຟັສ ເອັມ ໂຈນ (Rufus M. Jones) ທີ່ເມືອງລອນດອນໄດ້ສະຫລຸບວ່າ "ຫລັກການສຳຄັນທີ່ກ່ຽວກັບອິດສະລະທາງຈິດສຳນຶກການແຍກຕົວລະຫວ່າງຄຣິສຕະຈັກແລະລັດ ເສລີພາບໃນການນັບຖືສາດສະໜາເປັນເລື່ອງສຳຄັນຂອງປະຊາທິປະໄຕ ແລະສິ່ງເຫລົ່ານີ້ໄດ້ມາຈາກການເຄື່ອນໄຫວຂອງແອນນາບັບຕິສໃນສະໄໝປະຕິຮູບສາດສະໜາ. ຜູ້ນຳທີ່ກ້າຫານເຫລົ່ານີ້ໄດ້ປະກາດຫລັກສຳຄັນທີ່ກ່າວມານີ້ ແລະໄດ້ທ້າທາຍຄຣິດສະຕຽນຢູ່ໃນໂລກນີ້ໃຫ້ປະຕິບັດຕາມ".[23]

ທ່ານໄດ້ເຂົ້າໃຈຄວາມເຊື່ອຄຣິດສະຕຽນດັ່ງປະໂຫຍກທີ່ຈະກ່າວຂ້າງລຸ່ມນີ້ຫລືບໍ່?

ຖ້າທ່ານເຂົ້າໃຈເຊັ່ນນີ້ ທ່ານກໍເປັນຄຣິດສະຕຽນໃນຮູບແບບມຸມມອງຂອງແອນນາບັບຕິສ.

**ພຣະເຢຊູເປັນສູນກາງແຫ່ງຄວາມເຊື່ອຂອງຂ້າພະເຈົ້າ.**

( ) ຂ້າພະເຈົ້າ ເຊື່ອໄວ້ວາງໃຈໃນພຣະເຢຊູຄຣິດ ແລະເຊື່ອວ່າພຣະອົງຈະເຮັດໃຫ້ຄວາມເຊື່ອຂອງຂ້າພະເຈົ້າສົມບູນ.

( ) ຂ້າພະເຈົ້າ ຕີຄວາມໝາຍພຣະຄຳຂອງພຣະເຈົ້າ ຈາກມຸມມອງທີ່ມີພຣະຄຣິດເປັນສູນກາງຂອງຄວາມເຊື່ອ.

( ) ຂ້າພະເຈົ້າ ພົບເຫັນວ່າຫົວໃຈຂອງສາດສະໜາຄຣິດຄື ການເປັນລູກສິດ ແລະມຸ້ງທີ່ຈະຕິດຕາມພຣະເຢຊູຄຣິດໃນຊີວິດປະຈຳວັນ.

**ຊຸມຊົນຄຣິດສະຕຽນເປັນສູນກາງແຫ່ງຊີວິດຂອງຂ້າພະເຈົ້າ.**

( ) ຂ້າພະເຈົ້າ ເຊື່ອວ່າການໃຫ້ອະໄພເຮັດໃຫ້ຊຸມຊົນຜູ້ເຊື່ອໝັ້ນຄົງ.

( ) ຂ້າພະເຈົ້າ ສຶກສາພຣະຄຳຮ່ວມກັນກັບຜູ້ທີ່ເຊື່ອຄົນອື່ນໆ ເພື່ອຈະຄົ້ນຫາຫົນທາງນຳໄປໃຊ້ໃນຍຸກສະໄໝຂອງເຮົາ.

( ) ຂ້າພະເຈົ້າ ເຊື່ອວ່າກຸ່ມຍ່ອຍ (ກຸ່ມແຊລ) ເປັນພື້ນຖານຂອງຄຣິສຕະຈັກທີ່ເຂັ້ມແຂງ.

**ການເຮັດໃຫ້ຄືນດີເປັນວຽກງານຕົ້ນຕໍຂອງຂ້າພະເຈົ້າ.**

( ) ຂ້າພະເຈົ້າ ໄດ້ຖືກເອີ້ນໃຫ້ຊ່ວຍນຳຄົນອື່ນຄືນດີກັບພຣະເຈົ້າ ໂດຍຜ່ານທາງຄວາມເຊື່ອໃນພຣະເຢຊູ.

( ) ຂ້າພະເຈົ້າ ເຊື່ອໃນການຄືນດີກັນ ປະກອບໄປກັບການປະກາດ ແລະການສ້າງສັນຕິສຸກ.

( ) ຂ້າພະເຈົ້າ ປະຕິເສດຄວາມບໍ່ຍຸດຕິທັມ ແລະຄວາມຮຸນແຮງທຸກຮູບແບບ ແລະສົ່ງເສີມເລື່ອງສັນຕິແທນສົງຄາມ ແລະຄວາມຂັດແຍ່ງອື່ນໆ.

## ໜັງສືອ້າງອີງ


1. Jack Trout, *Differentiate or Die* (New York: John Wiley and Sons, 2000).
2. See James C. Collins and Jerry I. Porras, "Building Your Com pany's Vision," in*Harvard BusinessReview* (Lewis, Del.: Harvard Business Publishing, September 1996).
3. This alliteration of values is adapted from Grace Davie by Alan Kreider in his book, *The Change of Conversion and the Origin of Christendom* (Eugene, Ore.: Wipf & Stock Publishers, 1999), pp. xiv-xvi.
4. Harold S. Bender, *The Anabaptist Vision* (Scottdale, Pa.: Herald Press, 1944).
5. For a well-researched study of the changes to the process of incurporating new believers into church membership, see *ibid.*, Kreider, *The Change of Conversion*.
6. For a biography of Constantine, see William Smith, ed., *A Diction ary of Christian Biography*, Vol. 1 (New York: AMS Press, 1974), pp. 623-649.
7. For an outline of Augustine's life and theology, see Erwin Fahl busch, ed., *The Encyclopedia of Christianity,* Vol. 1 (Grand Rapids, Mich.: Eerdmans Publishing, 1999), pp. 159-165.
8. John D. Roth, *Stories: How Mennonites Came to Be* (Scottdale, Pa.: Herald Press, Scottdale, 2006). See chapter 2 for descriptions of the revolt, reform, and renewal of the Reformation.
9. For further understanding on the various streams of Anabaptism, see C. Arnold Snyder, *Anabaptist History and Theology* (Kitchener, Ont.:Pandora Press, Kitchener, 1997).
10. For primary sources related to themes that were important to the Anabaptists, see *Anabaptism in Outline*, edited by Walter Klaassen (Scottdale, Pa., Herald Press, 1981).
11. Peter Kehler was a colleague of mine in mission. He served in Taiwan from 1959-1975 and 1991-1993.
12. See Klaassen, *Anabaptism in Outline*, pp. 23-24, 72-73, and 140ff.
13. John H. Redekop, *Politics under God* (Scottdale, Pa.: Herald Press, 2007). See especially chapter 6, "What does God require of govern ments?"
14. From a personal conversation at a Mennonite World Conference meeting in Wichita, Kansas, 1978.
15. See Roth, *Stories: How Mennonites Came to Be,*chapter 4.
16. William A. Beckham, *The Second Reformation: Reshaping the Church for the 21st Century* (Houston, TX: Touch Outreach Ministries, 1998) pp. 25-2
17. For more on my theology and practice of small groups, see two of my publications, *Called to Care* and *Called to Equip* (Scottdale, Pa.: Herald Press) 1993.
18. See Kreider, *The Change of Conversion*, pp. xiv-xvi.
19. Walter Klaassen, *Living at the End of the Ages* (Lanham, Md.: Uni versity Press of America, 1992), chapter 4, "The Age of the Spirit."
20. Hyoung Min Kim, *Sixteenth-century Anabaptist Evangelism* (Ann Arbor, Mich.: ProQuest, 2002).
21. For a contemporary application of how discipleship relates to issues of justice and social action, see Ronald J. Sider, *I Am Not a Social Activist* (Scottdale, Pa.: Herald Press, 2008).
22. Samuel Shoemaker, *How to Become a Christian* (New York, NY: Harper and Row, 1953), p. 71.
23. *The Recovery of the Anabaptist Vision,* edited by Guy F. Hershberger (Scottdale, Pa.: Herald Press, 1957), pp. 29-30. This volume also includes a wealth of essays on the rise and theology of Anabaptism.

**ຮູບແບບແລະຄຳຖາມເພື່ອອະທິບາຍ**

**ຄ່ານິຍົມຫລັກຂໍ້ເຊື່ອ ທີ ໑**

ພຣະເຢຊູເປັນສູນກາງແຫ່ງຄວາມເຊື່ອຂອງພວກເຮົາ

ຕັ້ງໃຈເອົາພຣະເຢຊູເປັນຜູ້ບຸກເບີກຄວາມເຊື່ອ ແລະເປັນຜູ້ເຮັດໃຫ້ຄວາມເຊື່ອຂອງເຮົາສົມບູນ ເຮັບເຣີ ໑໘:໔

| ຄຣິດສະຕຽນຈຳນວນຫລາຍເນັ້ນເຖິງ | ຄຣິດສະຕຽນແອນນາບັບຕິສເນັ້ນເຖິງ |
|---|---|
| **໑. ການສິ້ນພຣະຊົນຂອງພຣະຄຣິດ**<br>ຄຣິດສະຕຽນເປັນຈຳນວນຫລວງຫລາຍເນັ້ນເຖິງຄວາມບໍລິສຸດຂອງພຣະເຈົ້າ ແລະຄວາມລອດພົ້ນຈາກບາບ ພວກເຂົາເນັ້ນການສິ້ນພຣະຊົນຂອງພຣະອົງ ແຕ່ບໍ່ໄດ້ໃຫ້ຄວາມສາຄັນຕໍ່ຊີວິດການສອນ ແລະການເຈີມໃຫ້ພະລັງທີ່ມາຈາກພຣະເຢຊູ ຄວາມສຳຄັນຂອງຄຣິດສະຕຽນກໍຄືການໃຫ້ອະໄພ. | **໑. ຊີວິດຂອງພຣະເຢຊູຄຣິດ**<br>ຄຣິດສະຕຽນແອນນາບັບຕິສ ເນັ້ນຄວາມບໍລິສຸດແລະພຣະຄຸນຂອງພຣະເຈົ້າ ທີ່ໃຫ້ອະໄພພວກເຮົາແຕ່ກໍໃຫ້ຄວາມສຳຄັນເຖິງ "ຊີວິດຂອງພຣະເຢຊູຄຣິດທີ່ທຳໃຫ້ພຣະອົງຊຶ່ງສິ້ນພຣະຊົນແຕ່ພຣະເຢຊູຊຶ່ງເປັນພຣະເຈົ້າທີ່ເປັນຢູ່ ສາມາດເສີມກຳລັງໃຫ້ເຮົາ ເພື່ອເຮົາຈະຕິດຕາມພຣະອົງໃນຊີວິດປະຈຳວັນ ຄວາມສຳຄັນຂອງການເປັນຄຣິດສະຕຽນຄືເປັນລູກສິດຂອງພຣະອົງ. |
| **ທ່ານເຫັນພ້ອມວ່າຊີວິດຂອງຄຣິດສະຕຽນຄື ຊີວິດທີ່ເປັນເໝືອນລູກສິດຫລືບໍ່?** | |
| **໘. ພຣະຄຳພີໃນຮູບແບບຮາບພຽງ**<br>ຄຣິດສະຕຽນຈຳນວນຫລວງຫລາຍຈະມອງເຫັນພຣະຄຳຂອງພຣະເຈົ້າມີສິດທິລິດເດດ ສຸດທ້າຍຫລາຍກວ່າພຣະເຢຊູ ການຊົງນຳໃນຊີວິດປະຈຳວັນຈະມາຈາກພຣະຄຳພີຫລາຍໆຕອນ ຊຶ່ງພວກເຂົາເຫັນວ່າສອດຄ່ອງກັບສະຖານະການນັ້ນ ການຕັດສິນໃຈໃນທຸກເລື່ອງບໍ່ຈຳເປັນຕ້ອງສອດຄ່ອງກັບຄຳສອນຂອງພຣະເຢຊູ ຊຶ່ງເປັນສູນກາງຂອງຄວາມເຊື່ອ. | **໘. ພຣະຄຳທີ່ມີ "ພຣະຄຣິດເປັນສູນກາງ"**<br>ແອນນາບັບຕິສຍອມຮັບວ່າ ພຣະຄຳທຸກຕອນໄດ້ຮັບການດົນໃຈມາຈາກພຣະເຈົ້າ ແຕ່ພຣະເຢຊູເປັນຜູ້ເປີດເຜີຍທຸກຢ່າງຂອງພຣະເຈົ້າທີ່ຊັດເຈນທີ່ສຸດພຣະອົງຊົງມີສິດທິອຳນາດຢ່າງເດັດຂາດໃນການຕັດສິນ ພຣະເຢຊູເຮັດໃຫ້ພຣະຄຳພີເດີມສົມບູນພຣະອົງເປັນມາດຕະຖານແລະຈະລິຍະທັມຕໍ່ບຸກຄົນສ່ວນຕົວແລະສັງຄົມ. |
| **ຈົ່ງອະທິບາຍຄວາມແຕກຕ່າງກັນ "ແບບຮາບພຽງ" ກັບ "ພຣະຄຳທີ່ພຣະເຢຊູເປັນສູນກາງ"** | |
| **໓. ລັດຖະບານມີອຳນາດຢ່າງເດັດຂາດ**<br>ຄຣິດສະຕຽນຫລາຍຄົນເຊື່ອວ່າ ຜູ້ນາລັດຖະບານແມ່ນໄດ້ຮັບການແຕ່ງຕັ້ງມາຈາກພຣະເຈົ້າ ດ້ວຍເຫດນີ້ເຂົາຈຶ່ງຕ້ອງເຊື່ອຟັງລັດຖະບານ ເຖິງແມ່ນວ່າຄາວຽກຮ້ອງຈາກລັດຖະບານຈະຂັດແຍ່ງກັບຄຳສອນພຣະເຢຊູ ຫລືຈິດສຳນຶກຂອງເຂົາກໍຕາມ. | **໓. ພຣະເຢຊູມີອຳນາດຢ່າງເດັດຂາດ**<br>ແອນນາບັບຕິສຮັບຮູ້ວ່າ ລັດຖະບານໄດ້ຮັບການສະຖາປະນາຈາກພຣະເຈົ້າ ເຂົາຈະຮັກສາຊີວິດ ແລະເຮັດໃຫ້ບ້ານເມືອງມີລະບຽບ ແຕ່ການຮຽກຮ້ອງຂອງລັດຖະບານຈະຕ້ອງບໍ່ຄວນຢູ່ເໜືອກວ່າການຈົງຮັກພັກດີທີ່ເຮົາໃຫ້ກັບພຣະເຢຊູ. |
| **ການກ່າວວ່າ "ພຣະເຢຊູຊົງເປັນອົງພຣະຜູ້ເປັນເຈົ້າ" ມີຄວາມໝາຍຢ່າງໃດຕໍ່ທ່ານ?** | |

**ຄ່ານິຍົມຫລັກຂໍ້ເຊື່ອ ທີ ໒**

**ຊຸມຊົນຄຣິດສະຕຽນເປັນສູນກາງແຫ່ງຊີວິດຂອງພວກເຮົາ**

ເຂົາໄດ້ຮ່ວມໃຈກັນໃນພຣະວິຫານ ແລະກິນເຂົ້າຈີ່ຕາມບ້ານເຮືອນ ຮ່ວມກັນຮັບປະທານອາຫານດ້ວຍຄວາມຊື່ນຊົມຍິນດີ
ແລະມີໃຈກວ້າງຂວາງທຸກວັນ ທັງໄດ້ສັນລະເສີນພຣະເຈົ້າ ແລະຄົນທັງປວງກໍຊອບໃຈ (ກິດຈະການ ໒:໔໖-໔໗)

| **ຄຣິດສະຕຽນຈຳນວນຫລາຍເນັ້ນເຖິງ** | **ຄຣິດສະຕຽນແອນນາບັບຕິສເນັ້ນເຖິງ** |
|---|---|
| **໑. ການໃຫ້ອະໄພໃນແນວຕັ້ງ**<br>ມີຄຣິດສະຕຽນຈຳນວນຫລາຍທີ່ເນັ້ນການໃຫ້ອະໄພຈາກພຣະເຈົ້າ (ເອີ້ນວ່າການໃຫ້ອະໄພແນວຕັ້ງ) ຫລາຍກວ່າການໃຫ້ອະໄພຕໍ່ກັນແລະກັນ (ເອີ້ນວ່າການໃຫ້ອະໄພແນວຮາບ) ການໃຫ້ອະໄພແບບນີ້ຖືກມອງວ່າເປັນທາງທີ່ເຮັດໃຫ້ເຮົາໄດ້ຮັບຄວາມລອດແລະຊີວິດນິລັນ. | **໑. ການໃຫ້ອະໄພໃນແນວຮາບ**<br>ຄຣິດສະຕຽນແອນນາບັບຕິສຕ້ອງການໃຫ້ພຣະເຈົ້າໃຫ້ອະໄພເຂົາ ແຕ່ເປັນການໃຫ້ອະໄພແບບຮາບຄືການໃຫ້ອະໄພຊຶ່ງກັນແລະກັນ ການໃຫ້ອະໄພແບບຮາບແມ່ນເປັນການສົ່ງເສີມຊຸມຊົນຄຣິດສະຕຽນ ແລະເປັນຫົນທາງສ້າງຄວາມສຳພັນ ສັນຕິສຸກຕໍ່ຊຶ່ງກັນແລະກັນ. |
| **ການໃຫ້ອະໄພມີສ່ວນຊ່ວຍຊຸມຊົນຢ່າງໃດ?** | |
| **໒. ການຕີຄວາມໝາຍພຣະຄຳສ່ວນຕົວ**<br>ຄຣິດສະຕຽນຫລາຍຄົນໄດ້ຕີຄວາມໝາຍພຣະຄຳຂອງພຣະເຈົ້າດ້ວຍຄວາມເຂົ້າໃຈ ແລະປະສົບການຂອງຕົນເອງ ອີກດ້ານໜຶ່ງບາງຄົນໄດ້ອາໃສຄູສອນທີ່ໄດ້ຮັບການຝຶກຝົນມາແລ້ວ ຫລືອາຈານໃນການຕີຄວາມໝາຍຂອງພຣະຄຳ. | **໒. ການຕີຄວາມໝາຍໃນພຣະຄຳເປັນກຸ່ມ**<br>ແອນນາບັບຕິສຄຣິດສະຕຽນຍອມຮັບວ່າພຣະຄຳພີທຸກຕອນແມ່ນໄດ້ຮັບການດົນໃຈມາຈາກພຣະເຈົ້າ ແຕ່ພຣະເຢຊູເປັນຜູ້ເປີດເຜີຍທຸກຢ່າງຂອງພຣະເຈົ້າທີ່ຊັດເຈນທີ່ສຸດ ພຣະອົງຊົງມີສິດອຳນາດເດັດຂາດໃນການຕັດສິນ ພຣະເຢຊູເຮັດໃຫ້ພັນທະສັນຍາເດີມສົມບູນ ພຣະອົງເປັນມາດຕະຖານແລະຈະລິຍະທັມຂອງບຸກຄົນສ່ວນຕົວແລະສັງຄົມ |
| **ທ່ານສຶກສາພຣະຄຳພີໃນຮູບແບບໃດ ໃນຄຣິສຕະຈັກຂອງທ່ານ?** | |
| **໓. ການນະມັດສະການໃນພຣະວິຫານ**<br>ມີຄຣິດສະຕຽນເປັນຈຳນວນຫລາຍ ຄິດວ່າໃນການນະມັດສະການເປັນໜ່ວຍພື້ນຖານຂອງຄຣິສຕະຈັກ ຫລາຍຄັ້ງຄຣິສຕະຈັກຖືກມອງວ່າ ເປັນຕຶກອາຄານ ເປັນອົງການຫລືເປັນການສະແດງງານໃນຕອນເຊົ້າຂອງວັນອາທິດ. | **໓. ການນະມັດສະການໃນກຸ່ມຍ່ອຍ (ກຸ່ມແຊລ)**<br>ຄຣິດສະຕຽນແອນນາບັບຕິສມອງເຫັນວ່າ ຄຣິສຕະຈັກເປັນເໝືອນຄອບຄົວ ຄຣິສຕະຈັກເຂັ້ມແຂງຕ້ອງຈັດໃຫ້ເປັນເຄືອຄ່າຍຂອງກຸ່ມຍ່ອຍ (ກຸ່ມແຊລ) ຊຶ່ງສະມາຊິກໃນກຸ່ມຍ່ອຍນີ້ຈະສາມາດມີການສາມັກຄີທັມສຶດສາແບ່ງປັນພຣະຄຳ ແລະອະທິຖານຮ່ວມກັນ. |
| **ຖ້າກຸ່ມຍ່ອຍເປັນພື້ນຖານຄຣິສຕະຈັກທີ່ເຂັ້ມແຂງທ່ານຈະຕ້ອງເຮັດຢ່າງໃດ ໃຫ້ກຸ່ມຍ່ອຍເປັນຮູບພຣະທັມຫລາຍຂຶ້ນໃນຄຣິສຕະຈັກຂອງທ່ານ** | |

**ຄ່ານິຍົມຫລັກຂໍ້ເຊື່ອ ທີ ໓**

**ການເຮັດໃຫ້ຄືນດີກັບພຣະເຈົ້າເປັນງານຕົ້ນຕໍຂອງພວກເຮົາ**

ທັງໝົດນີ້ເກີດມາຈາກພຣະເຈົ້າຜູ້ຊຶ່ງເຮັດໃຫ້ເຮົາຄືນດີກັບພຣະອົງໂດຍທາງພຣະເຢຊູຄຣິດ
ແລະຊົງໂຜດປະທານໃຫ້ເຮົາມີພາລະກິດເລື່ອງການຄືນດີກັນ. (໒ ໂກຣິນໂທ ໕:໑໘)

| ຄຣິດສະຕຽນຈຳນວນຫລາຍເນັ້ນເຖິງ | ຄຣິດສະຕຽນແອນນາບັບຕິສເນັ້ນເຖິງ |
|---|---|
| **໑. ຄວາມຊອບທາງຄວາມເຊື່ອ**<br>ມີຄຣິດສະຕຽນຈຳນວນຫລາຍເນັ້ນຄວາມບໍລິສຸດຂອງພຣະເຈົ້າ ເຂົາໄດ້ເນັ້ນເຖິງຄວາມຈຳເປັນວ່າການເປັນຄົນຊອບທັມດ້ວຍພຣະຄຸນຂອງພຣະເຢຊູໂດຍຜ່ານທາງຄວາມເຊື່ອ ການກັບໃຈໃໝ່ໝາຍເຖິງການຄືນດີກັບພຣະເຈົ້າ ແລະມີຈຸດໝາຍປາຍທາງທີ່ສະຫວັນ. | **໑. ການປ່ຽນແປງໃນຊີວິດ**<br>ຄຣິດສະຕຽນແອນນາບັບຕິສມັກຈະເນັ້ນພຣະລັກສະນະການຊົງຮັກ ແລະການຊົງລ້ຽງດູຂອງພຣະເຈົ້າ ເຂົາປາດຖະໜາທີ່ຈະໄດ້ຮັບການປ່ຽນແປງໂດຍອາໃສພຣະວິນຍານບໍລິສຸດເພື່ອຈະເປັນເໝືອນພຣະຄຣິດ ໃນທັດສະນະຄະຕິແລະການປະຕິບັດຂອງເຂົາ ການກັບໃຈໃໝ່ໝາຍເຖິງການຄືນດີກັບພຣະເຈົ້າ ແລະເພິ່ງພາພຣະເຈົ້າເພື່ອຈະມີພະລັງດຳລົງຊີວິດເໝືອນພຣະເຢຊູ. |
| **ພຣະລັກສະນະຂອງພຣະເຈົ້າທັງສອງດ້ານມີຄວາມໝາຍເທົ່າກັນ ທ່ານຈະເນັ້ນພຣະລັກສະນະດ້ານໃດ?** | |
| **໒. ຄວາມລອດສ່ວນຕົວ**<br>ຄຣິດສະຕຽນຈຳນວນຫລາຍຄິດວ່າການຄືນດີເປັນເລື່ອງສ່ວນຕົວ ການສ້າງສັນຕິສຸກແລະການຮັບໃຊ້ສັງຄົມເປັນພຽງສິ່ງເສີມ ແທນທີ່ຈະເປັນອົງປະກອບທີ່ຂາດບໍ່ໄດ້ຂອງຂ່າວປະເສີດ. | **໒. ການດຳລົງຊີວິດທີ່ມີການຄືນດີກັນ**<br>ແອນນາບັບຕິສຈະເຫັນວ່າ ການຄືນດີກັນເປັນເລື່ອງສ່ວນຕົວ ແຕ່ກໍເປັນເລື່ອງຂອງສັງຄົມດ້ວຍໃນການປະກາດ ແລະການສ້າງສັນຕິສຸກເປັນສິ່ງທີ່ຕ້ອງເຮັດຮ່ວມກັນຊຶ່ງເຮົາໃຊ້ຄຳສັບນີ້ເອີ້ນວ່າ “ການຄືນດີກັນ” |
| **ຂັ້ນຕອນການແກ້ໄຂໃຫ້ມີການຄືນດີກັນທີ່ກ່າວມາໃນພຣະທັມມັດທາຍ ໑໘ ມີຂັ້ນຕອນຢ່າງໃດແດ່?** | |
| **໓. ການຮັບໃຊ້ການທະຫານ**<br>ມີຄຣິດສະຕຽນຈຳນວນຫລາຍຟັງຄວາມຂອງລັດ ເຖິງແມ່ນວ່າການປະຕິບັດຈະຂັດແຍ່ງກັບຄຳສອນຂອງພຣະເຢຊູ ແລະຈິດສານຶກຂອງເຂົາກໍຕາມ ບາງຄົນກໍເຊື່ອໃນຍຸດທະວິທີ “ໃຊ້ຄວາມຮຸນແຮງເພື່ອການຄືນດີ” ຍຸດທະວິທີ “ສົງຄາມແຫ່ງຄວາມຊອບທັມ” ເມື່ອລັດຖະບານຂໍໃຫ້ເຂົາຮັບໃຊ້ທາງການທະຫານເຂົາກໍຍິນດີເຮັດ. | **໓. ຮັບໃຊ້ໃນດ້ານອື່ນໆ ທີ່ບໍ່ແມ່ນຮັບໃຊ້ການທະຫານ**<br>ແອນນາບັບຕິສເຊື່ອຟັງອຳນາດຂອງລັດ ເມື່ອການເຊື່ອຟັງນັ້ນບໍ່ຂັດກັບຄວາມເຊື່ອຟັງຂອງເຮົາທີ່ມີຕໍ່ພຣະເຢຊູຄຣິດ ພວກເຂົາຈະປະຕິເສດໃນສ່ວນຮ່ວມຂອງຄວາມຮຸນແຮງ ພວກເຂົາຈະແກ້ໄຂສິ່ງທີ່ບໍ່ຍຸດຕິທັມ ແລະຄືນດີກັບສັດຕູເປັນສິ່ງທີ່ສຳຄັນ ການຮັບໃຊ້ໃນດ້ານອື່ນໆທີ່ບໍ່ແມ່ນການທະຫານຈະຊ່ວຍແກ້ໄຂຄວາມຂັດແຍ່ງກັນແລະຄວນເປັນສິ່ງທີ່ໜ້າສົ່ງເສີມ. |
| **ທາງເລືອກອື່ນໆ ທີ່ຈະສ້າງສັນຕິນອກຈາກການຮັບໃຊ້ທະຫານນັ້ນມີທາງເລືອກໃດແດ່?** | |

## ສຳຫລັບການອ່ານເພີ້ມເຕີມ.


■ BENDER, Harold S., *The Anabaptist Vision* (Scottdale, Pa.: HeraldPress, 1944).

■ BLOUGH, Neal, *Christ in Our Midst: Incarnation, Church and Discipleship in the Theology of Pilgram Marpeck* (Kitchener, Ont.:Pandora Press, 2007).

■ *Confession of Faith in a Mennonite Perspective* (Scottdale, Pa.:Herald Press, 1995).

■ DRESCHER, John M., *Why I am a Conscientious Objector* (Morgantown, Pa.: Masthof Press, 2007).

■ HERSHBERGER, Guy F., ed., *TheRecovery of the Anabaptist Vision* (Scottdale, Pa.: Herald Press, 1957).

■ KLASSEN, Walter, *Anabaptism: Neither Catholic Nor Protestant*,3rd edition (Kitchener, Ont.: Pandora Press, 2001).

■ KREIDER, Alan, *The Change of Conversion and the Origin of Christendom* (Eugene, Ore.: Wipf and Stock Publishers,1999).

■ MURRAY, Stuart, *The Naked Anabaptist: The Bare Essentials of a Radical Faith* (Scottdale, PA: Herald Press, 2010).

■ NEUFELD, Alfred, *What We Believe Together* (Intercourse, Pa.:Good Books, 2007).

■ ROTH, John D., *Stories: How Mennonites Came to Be* (Scottdale, Pa.: Herald Press, 2006).

■ SNYDER, C. Arnold, *From Anabaptist Seed* (Kitchener, Ont.:Pandora Press, 1999).

■ SNYDER, C. Arnold, *Following in the Footsteps of Christ: The Anabaptist Spirituality* (Maryknoll, NY: Orbis Books, 2004).

No. 1 Calvin E. Shenk, *Understanding Islam: A Christian Reflection on the Faith of our Muslim Neighbors (2002).*

No. 2 James R. Krabill, *Does Youtr Church "Smell" Like Mission? Reflections on Becoming a Missional Church (2003).*

No. 3 Donna Kampen Entz, *From Kansas To Kenedougou…And Back Again (2004).*

No. 4 Alan Kreider, *Peace Church, Mission Church: Friends or Foew? (2004).*

No. 5 Peter Graber, *Money and Mission: A Discernment Guide for Congregations (2004).*

No. 6 Craig Pelkey-Landes, *Purpose Driven Mennonites (2004).*

No. 7 James R. Krabill and Stuart W. Showalter, editors, *Students Talk About Service (2004).*

No. 8 Lynda Hollinger-Janzen, *"A New Day in Mission:" Irene Weaver Reflects on Her Century of Ministry (2005).*

No. 9 Delbert Erb and Linda Shelly, *The Patagonia Story: Congregations in Argentina and Illinois Link "Arm-in-Arm" for Mission (2005).*

No. 10 *Together in Mission: Core Beliefs, Values and Commitments of Mennonite Mission Network (2006).*

No. 11 James R. Krabill, editor, *What I Learned from the African Church: Twenty-two Students Reflect on a Life-Changing Experience (2006).* *

No. 12 Ryan Miller and Ann Graham Price, editors, *Together; Sharing All of Christ With all of Creation (2006).*

No. 13 Michael J. Sherrill, *On Becoming a Missional Church in Japan (2007).* *

No. 14 Alicia Horst and Tim Showalter, editors, *BikeMovement: A Mennonite Young Adult Perspective on Church (2007).*

No. 15 Jackie Wyse, *Digging for Treasure in Your Own Backyard: Reflections on Missional Experiments in the Netherlands (2007).*

No. 16 Alan Kreider, *Tongue Screws and Testimony (2008).*

No. 17 Conrad L. Kanagy, *No Purse, No Bag, No Sanddals: A Profile of Mennonite Church Planterr, 1990-2005 (2008).*

No. 18 Palmer Becker, *What is an Anabaptist Christian? (2008). Reviesed Edition (2010).*

No. 19 M. Daniel Carroll R., *Immigration and the Bible (2010).*

No. 20 Matthew Krabill and David Stutzman, editors, *New Anabaptist Voices (2012).*

No. 21 Steve and Sheryl Martin, *For God so Loved Afghanistan: Journal Selections from 16 Years of Family Living in War-torn Land. (2013).* *

* Available in Spanish.